ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03/94/ສພຊ.

18 / 7 / 94

# ກົດໝາຍ
# ວ່າດ້ວຍທຸລະກິດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1.** ກົດໝາຍວ່າດ້ວຍທຸລະກິດ ກຳນົດອອກເພື່ອສົ່ງເສີມທຸກພາກສ່ວນເສດຖະກິດທີ່ລົງທຶນໃສ່ທຸລະກິດໃນທຸກຂະແໜງການ ເພື່ອແນໃສ່ເສີມຂະຫຍາຍເສດຖະກິດສິນຄ້າໄປຕາມກົນໄກຕະຫລາດ ທີ່ມີການດັດ ສົມຂອງລັດ.

**ມາດຕາ 2.** ນັກທຸລະກິດທັງພາຍໃນ ແລະຕ່າງປະເທດ ທີ່ລົງທຶນດຳເນີນທຸລະກິດໃນບັນດາຂະແໜງການ : ການຜະລິດ, ການຂົນສົ່ງ, ການກໍ່ສ້າງ, ການຄ້າ ແລະການບໍລິການອື່ນໆ ໄດ້ຮັບການປົກປ້ອງສິດ ແລະຜົນປະໂຫຍດຕາມກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 3.** ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ຄົນຕ່າງປະເທດ ລ້ວນແຕ່ມີສິດດຳເນີນ ຫລື ເຂົ້າຮ່ວມໃນການດຳເນີນທຸລະກິດ ໂດຍສອດຄ່ອງກັບກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 4.** ວິສາຫະກິດ ແມ່ນຫົວໜ່ວຍທຸລະກິດທີ່ສ້າງຕັ້ງຂື້ນເພື່ອແນໃສ່ຈັດຕັ້ງດຳເນີນທຸລະກິດ. ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວິສາຫະກິດມີສີ່ປະເພດຄື : ວິສາຫະກິດເອກະຊົນ, ວິສາຫະກິດຂອງລັດ, ວິສາຫະກິດລວມໝູ່ ແລະວິສາຫະກິດປະສົມ ( ວິສາຫະກິດລັດປະສົມກັບພາຍໃນ ຫລືຕ່າງປະເທດ, ວິສາຫະກິດເອກະຊົນ ປະສົມກັບພາຍໃນ ຫລື ຕ່າງປະເທດ ).

ວິສາຫະກິດມີ ສອງຮູບການຄື : ວິສາຫະກິດສ່ວນບຸກຄົນ ແລະບໍລິສັດ.

**ມາດຕາ 5.** ການເຄື່ອນໄຫວ ຂອງວິສາຫະກິດ ໃນທຸກ ພາກສ່ວນເສດຖະກິດ, ທຸກປະເພດລ້ວນ ແຕ່ມີການພົວພັນຊຶ່ງກັນ ແລະ ກັນ ຮ່ວມມືກັນ ແລະ ແຂ່ງຂັນກັນດ້ວຍຄວາມສະເຫມີພາບຕໍ່ຫນ້າກົດຫມາຍ.

**ມາດຕາ 6.** ທຶນ, ຊັບສິນບັດ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບັນດາວິສາຫະກິດຈະໄດ້ຮັບການປົກປ້ອງຕາມກົດຫມາຍ.

**ມາດຕາ 7.** ທຸກວິສາຫະກິດມີພັນທະປົກປ້ອງສິດ ແລະຜົນປະໂຫຍດຂອງຜູ້ອອກແຮງງານ, ຮັກສາສິ່ງແວດລ້ອມ, ປະຕິບັດພັນທະຕໍ່ລັດ, ດຳເນີນທຸລະກິດຕາມຂະແຫນງການ ແລະ ຂອບເຂດທຸລະກິດທີ່ຕົນໄດ້ຮັບອະນຸຍາດ, ປະຕິບັດລະບຽບການບັນຊີ ແລະ ຊຳລະຕາມລະບຽບການ ຂອງທະນາຄານ.

**ມາດຕາ 8.** ກົດຫມາຍວ່າດ້ວຍທຸລະກິດສະບັບນີ້ນຳໃຊ້ໃນຂອບເຂດທຸລະກິດທີ່ມີທຶນຈົດທະບຽນແຕ່ 1.000.000 ກີບ ຂຶ້ນໄປ.

## ພາກທີ II
## ນັກທຸລະກິດ, ເງື່ອນໄຂການດຳເນີນທຸລະກິດ ແລະ ໃບຢັ້ງຢືນການຄ້າ

### ຫມວດທີ 1
### ນັກທຸລະກິດ

**ມາດຕາ 9.** ນັກທຸລະກິດ ແມ່ນຜູ້ທີ່ທຳການເຄື່ອນໄຫວທຸລະກິດໂດຍຖືເອົາກິດຈະການນັ້ນເປັນອາຊີບ.

**ມາດຕາ 10.** ມືກາງ ແມ່ນນັກທຸລະກິດອາດຈະເປັນບຸກຄົນ ຫລື ນິຕິບຸກຄົນຊຶ່ງເປັນຜູ້ຕາງຫນ້າ, ຕິດຕໍ່, ພົວພັນກ່ຽວກັບທຸລະກິດລະຫວ່າງນັກທຸລະກິດດ້ວຍກັນ ຫລື ລະຫວ່າງນັກທຸລະກິດກັບລູກຄ້າ.

ມືກາງປະກອບດ້ວຍ ຕົວແທນ ແລະ ນາຍຫນ້າ :

- ຕົວແທນແມ່ນບຸກຄົນ ຫລື ນິຕິບຸກຄນຊຶ່ງເປັນຜູ້ຕາງຫນ້າໃຫ້ບຸກຄົນ ຫລື ນິຕິບຸກຄົນໃດຫນຶ່ງເພື່ອທຳການເຈລະຈາ ແລະເຊັນສັນຍາທຸລະກິດຕາງໆ;
- ນາຍຫນ້າແມ່ນບຸກຄົນ ຫລື ນິຕິບຸກຄົນຊຶ່ງດຳເນີນວຽກງານໃດຫນຶ່ງເພື່ອຜົນປະໂຫຍດຂອງບຸກຄົນອື່ນ ໂດຍໄດ້ຮັບຄ່າຕອບແທນ ຫລືສ້າງການພົວພັນຕິດຕໍ່ລະຫວ່າງນັກທຸລະກິດເພື່ອພົວພັນເຈ

ລະຈາເຮັດສັນຍາໂດຍບໍ່ໄດ້ເປັນຜູ້ຕາງຫນ້າໃຫ້ຝ່າຍໃດຝ່າຍຫນຶ່ງ.

**ມາດຕາ 11.** ບຸກຄົນທີ່ຖືກຫ້າມດຳເນີນທຸລະກິດເປັນອາຊີບ ມີ :
- ເດັກທີ່ຍັງບໍ່ທັນເຖິງອາຍຸສິບແປດປີ;
- ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
- ຜູ້ທີ່ຖືກຫ້າມດຳເນີນທຸລະກິດຕາມຄຳຕັດສິນຂອງສານ;
- ລັດຖະກອນເວັ້ນເສັຽແຕ່ໄດ້ຮັບອະນຸຍາດສະເພາະເທົ່ານັ້ນ.

## ຫມວດທີ 2
## ເງື່ອນໄຂການດຳເນີນທຸລະກິດ

**ມາດຕາ 12.** ທຸລະກິດທີ່ເກືອດຫ້າມ ແມ່ນທຸລະກິດທີ່ຂັດກັບລະບຽບກົດຫມາຍຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 13.** ບາງຂະແຫນງທຸລະກິດທີ່ມີຄວາມສຳຄັນຕໍ່ຄວາມປອດໄພຂອງຊາດ,ຕໍ່ເສດຖະກິດ ຫລື ສັງຄົມນັ້ນຕ້ອງມີການຄວບຄຸມຢ່າງໃກ້ຊິດຈາກລັດ ເຊັ່ນ ທຸລະກິດກ່ຽວກັບ :
- ນ້ຳມັນເຊື້ອໄຟ;
- ພະລັງງານໄຟຟ້າ;
- ນ້ຳປະປາ;
- ໂທລະຄົມມະນາຄົມ;
- ໄມ້ ແລະ ຜະລິດຕະພັນຈາກໄມ້;
- ບໍ່ແຮ່ ແລະ ແຮ່ທາດ;
- ສະບຽງອາຫານ;
- ຢາປົວພະຍາດ;
- ທາດເຄມີ;
- ເຫລົ້າ;
- ຢາສູບ.

ນອກຈາກນີ້ແລ້ວ ລັດຖະບານອາດຈະໄດ້ກຳນົດຂະແຫນງທຸລະກິດທີ່ມີການຄວບຄຸມຕື່ມອີກໃນແຕ່ລະໄລຍະ.

**ມາດຕາ 14.** ຂະແຫນງທຸລະກິດທີ່ສະຫງວນໄວ້ໃຫ້ສະເພາະພົນລະເມືອງລາວນັ້ນ ລັດຖະບານຈະເປັນຜູ້ກຳນົດຕ່າງຫາກ.

## ຫມວດທີ 3
## ໃບຢັ້ງຢືນການຄ້າ

**ມາດຕາ 15.** ໃບຢັ້ງຢືນການຄ້າ ແມ່ນເອກະສານສັນຍາທີ່ເປັນພື້ນຖານໃນການຊໍາລະ ເງິນຕາມລະບຽບການຂອງສະຖາບັນການເງິນຊຶ່ງສາມາດປ່ຽນມືໄດ້ ແລະເປັນພາຫະນະໃນດ້ານສິນເຊື່ອ.

ໃບຢັ້ງຢືນການຄ້າປະກອບດ້ວຍສີ່ປະເພດຄື: ໃບສັນຍາໃຊ້ຫນີ້, ໃບຢັ້ງຢືນເງິນຝາກຄໍ້າປະກັນ, ພັນທະບັດແລກເງິນ ແລະ ແຊັກ.

ໃບສັນຍາໃຊ້ຫນີ້ ແມ່ນໃບຢັ້ງຢືນໃຊ້ຫນີ້ຂອງບຸກຄົນໃດຫນຶ່ງທີ່ຕົກລົງຈະຈ່າຍຈໍານວນເງິນໃດຫນຶ່ງໃຫ້ບຸກຄົນອື່ນ ໃນວັນທີ່ອັນແນ່ນອນ ຫລືເອົາສິນຄ້າມາເປັນສິ່ງຄໍ້າປະກັນ.

ໃບຢັ້ງຢືນເງິນຝາກຄໍ້າປະກັນ ແມ່ນເອກະສານຢັ້ງຢືນເງິນຝາກສະເພາະຈໍານວນໃດຫນຶ່ງ ຈາກທະນາຄານ.

ພັນທະບັດແລກເງິນ ແມ່ນໃບທວງຫນີ້ຊຶ່ງເຈົ້າຫນີ້ທວງໃຫ້ລູກຫນີ້ໃຊ້ແທນຫນີ້ສິນໃຫ້ແກ່ບຸກຄົນໃດຫນຶ່ງທີ່ຖືກບົ່ງຕົວໃນໃບທວງຫນີ້ ໃນວັນທີ່ອັນແນ່ນອນ.

ເຊັກ ແມ່ນພັນທະບັດຊຶ່ງເຈົ້າຂອງບັນຊີເງິນຝາກທະນາຄານນໍາໃຊ້ ເພື່ອໃຫ້ທະນາຄານນັ້ນຈ່າຍເງິນຈໍານວນຫນຶ່ງໃຫ້ຕົນເອງ ຫລືໃຫ້ແກ່ບຸກຄົນອື່ນ.

## ພາກທີ III
## ການຈັດຕັ້ງດໍາເນີນທຸລະກິດ

## ຫມວດທີ 1
## ການຈັດຕັ້ງ ແລະການຂຶ້ນທະບຽນວິສາຫະກິດ

**ມາດຕາ 16.** ຜູ້ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດໃຫ້ຍື່ນຄໍາຮ້ອງຂໍສ້າງຕັ້ງ ແລະຂຶ້ນທະບຽນວິສາຫະກິດນໍາຂະແຫນງການການຄ້າ. ການປະກອບຄໍາຮ້ອງຂໍສ້າງຕັ້ງ ແລະ ຂຶ້ນທະບຽນວິສາຫະກິດນັ້ນຂະແຫນງການກ່ຽວຂ້ອງຈະເປັນຜູ້ກໍານົດຕ່າງຫາກ.

ເມື່ອໄດ້ຮັບຄໍາຮ້ອງຂໍສ້າງຕັ້ງແລ້ວ ຂະແຫນງການການຄ້າ ແລະ ຂະແຫນງການທີ່ກ່ຽວຂ້ອງຕ້ອງພິຈາລະນາໂດຍໄວ ແລະໃຫ້ຄໍາຕອບຢ່າງຊ້າບໍ່ເກີນ 60 ວັນ ນັບແຕ່ມື້ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ທຸກວິສາຫະກິດຈະຖືວ່າໄດ້ສ້າງຕັ້ງຖືກຕ້ອງຕາມກົດຫມາຍ ກໍຕໍ່ເມື່ອຫາກໄດ້ຂຶ້ນທະບຽນວິສາຫະກິດແລ້ວເທົ່ານັ້ນ.

**ມາດຕາ 17.** ການຂຶ້ນທະບຽນວິສາຫະກິດປະຕິບັດດ້ວຍວິທີຈົດກ່າຍເລກລໍາດັບຂອງບັນດາວິສາຫະກິດຢ່າງຕໍ່ເນື່ອງເປັນລະບົບເຂົ້າໃນ " ປື້ມທະບຽນວິສາຫະກິດ " ທີ່ເຕົ້າໂຮມສັນຍາ,

ກິດລະບຽບ ແລະທຸກຂໍ້ມູນກ່ຽວກັບວິສາຫະກິດຕ່າງໆ ຊຶ່ງເຈົ້າຫນ້າທີ່ ທີ່ກ່ຽວຂ້ອງຮັກສາໄວ້. ຫລັງຈາກການສ້າງຕັ້ງວິສາຫະກິດແລ້ວ ຖ້າຫາກມີການປ່ຽນແປງຢ່າງໃດຢ່າງຫນຶ່ງກ່ຽວກັບວິສາຫະກິດ ເຊັ່ນການປ່ຽນແປງກິດລະບຽບ, ການຍຸບເລີກ, ການຊໍາລະສະສາງນັ້ນຜູ້ຮັບຜິດຊອບວິສາຫະກິດຕ້ອງແຈ້ງໃຫ້ເຈົ້າຫນ້າທີ່ ທີ່ກ່ຽວຂ້ອງເພື່ອຈະໄດ້ບັນທຶກໄວ້ໃນປື້ມທະບຽນວິສາຫະກິດ.

**ມາດຕາ 18.** ພາຍຫລັງທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວຕ້ອງໄດ້ຈົດທະບຽນອາກອນນໍາຂະແຫນງການເງິນ.

ໃບທະບຽນອາກອນ ແມ່ນໃບຕິດຕາມການປະຕິບັດພັນທະປະຈໍາປີຕໍ່ລັດ ຕາມລະບຽບກົດຫມາຍການເງິນ.

**ມາດຕາ 19.** ເມື່ອໄດ້ຮັບອະນຸຍາດໃຫ້ສ້າງຕັ້ງແລ້ວ ວິສາຫະກິດຕ້ອງຕິດປ້າຍຊື່ວິສາຫະກິດຕາມລະບຽບການ. ຖ້າວິສາຫະກິດນັ້ນຫາກບໍ່ດໍາເນີນກິດຈະການຂອງຕົນພາຍໃນຫນຶ່ງປີນັບແຕ່ມື້ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງເປັນຕົ້ນໄປ ທະບຽນວິສາຫະກິດຈະຕົກໄປ.

## ຫມວດທີ 2
## ຫລັກການລວມຂອງບໍລິສັດ

**ມາດຕາ 20.** ບໍລິສັດແມ່ນຫົວຫນ່ວຍທຸລະກິດຊຶ່ງບຸກຄົນ ນັບແຕ່ສອງຄົນຂຶ້ນໄປ ຫລືນິຕິບຸກຄົນເປັນຜູ້ສ້າງຕັ້ງຂຶ້ນບົນພື້ນຖານສັນຍາເພື່ອເຕົ້າໂຮມຊັບສິນບັດ ທຶນຮອນ ແຮງງານ ແນໃສ່ດໍາເນີນທຸລະກິດຮ່ວມກັນ ແລະແບ່ງປັນກໍາໄລສຸດທິ.

ສໍາລັບບໍລິສັດຈໍາກັດນັ້ນ ບຸກຄົນຜູ້ດຽວ ຫລືນິຕິບຸກຄົນກໍສາມາດສ້າງຕັ້ງຂຶ້ນໄດ້.

**ມາດຕາ 21.** ຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ບໍລິສັດມີສາມຮູບແບບຄື:

- ບໍລິສັດຮຸ້ນສ່ວນ;
- ບໍລິສັດຈໍາກັດ;
- ບໍລິສັດມະຫາຊົນ.

**ມາດຕາ 22.** ບໍລິສັດສ້າງຕັ້ງຂຶ້ນບົນພື້ນຖານສັນຍາທີ່ເປັນລາຍລັກອັກສອນລະຫວ່າງຂາຮຸ້ນເອີ້ນວ່າ ສັນຍາບໍລິສັດ ຊຶ່ງເງື່ອນໄຂ ແລະ ເນື້ອໃນຕ້ອງສອດຄ່ອງກັບກົດຫມາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະກົດຫມາຍອື່ນໆຂອງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເວັ້ນເສັຽແຕ່ບໍລິສັດຈໍາກັດຜູ້ດຽວ. ສັນຍາດັ່ງກ່າວເປັນພື້ນຖານໃຫ້ແກ່ການພົວພັນລະຫວ່າງຜູ້ປະກອບທຶນດ້ວຍກັນ.

ບຸກຄົນຫລືນິຕິບຸກຄົນທີ່ເຂົ້າຮ່ວມສັນຍາເພື່ອປະກອບທຶນສ້າງຕັ້ງບໍລິສັດ ອາດຈະແມ່ນຂາຮຸ້ນຫລືຜູ້ຖືຮຸ້ນ.

ຂາຮຸ້ນ ແມ່ນຜູ້ລົງທຶນໃນບໍລິສັດຮຸ້ນສ່ວນ ແລະ ບັນດາຜູ້ລິເລີ່ມສ້າງຕັ້ງບໍລິສັດຈຳກັດ ຫລືບໍລິສັດມະຫາຊົນ.

ຜູ້ຖືຮຸ້ນ ແມ່ນຜູ້ລົງທຶນອື່ນໆຂອງບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ, ຊຶ່ງອາດມີຖານະ ເປັນນັກທຸລະກິດ ຫລືບໍ່ກໍໄດ້.

**ມາດຕາ 23.** ທຶນຂອງບໍລິສັດແມ່ນໄດ້ມາຈາກການປະກອບສ່ວນຂອງຂາຮຸ້ນ ແລະ ຜູ້ຖືຮຸ້ນ. ທຶນຂອງບໍລິສັດປະກອບດ້ວຍຊັບສິນບັດຄົງທີ່ ແລະທຶນຫມູນວຽນ.

**ມາດຕາ 24.** ບໍລິສັດຈຳກັດ, ບໍລິສັດຈຳກັດຜູ້ດຽວ ແລະບໍລິສັດມະຫາຊົນ ຕ້ອງມີຄັງສະສົມຕາມລະບຽບການຊຶ່ງຫັກຈາກກຳໄລສຸດທິ ທີ່ແບ່ງປັນໄດ້ແຕ່ຫ້າຫາສິບສ່ວນຮ້ອຍ.

ສ່ວນການກຳນົດຄັງສະສົມອື່ນໆ ແລະຄັງແຮນັ້ນ ແມ່ນບົ່ງໄວ້ໃນກົດລະບຽບຂອງບໍລິສັດ.

**ມາດຕາ 25.** ຂາຮຸ້ນ ແລະຜູ້ຖືຮຸ້ນມີສິດ ແລະຫນ້າທີ່ດັ່ງນີ້ :

- ປະກອບສ່ວນໃນກິດຈະການຂອງບໍລິສັດຕາມກົດລະບຽບຂອງບໍລິສັດ;
- ຮັບຊາບກ່ຽວກັບການເຄື່ອນໄຫວຂອງບໍລິສັດ;
- ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງ;
- ໄດ້ຮັບການແບ່ງປັນຜົນກຳໄລ;
- ປະກອບທຶນໃຫ້ແກ່ບໍລິສັດ ແລະຖອກຮຸ້ນຕາມກຳນົດເວລາ;
- ຮັບຜິດຊອບຕໍ່ຫນີ້ສິນຂອງບໍລິສັດຕາມແຕ່ລະຮູບແບບບໍລິສັດ.

**ມາດຕາ 26.** ບໍລິສັດບໍ່ເຄື່ອນໄຫວໃນນາມບຸກຄົນຜູ້ເປັນເຈົ້າຂອງເຫມືອນກັບວິສາຫະກິດສ່ວນບຸກຄົນ ແຕ່ຫາກເຄື່ອນໄຫວໃນຖານະນິຕິບຸກຄົນ. ບໍລິສັດມີຖານະນິຕິບຸກຄົນ ນັບແຕ່ມື້ໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

ຖານະນິຕິບຸກຄົນຂອງບໍລິສັດປະກອບດ້ວຍ :

- ຊື່ຂອງບໍລິສັດ ຊຶ່ງຕ້ອງບອກແຈ້ງວ່າເປັນບໍລິສັດຮູບແບບໃດ;
- ທີ່ຕັ້ງສຳນັກງານຂອງບໍລິສັດ;
- ຊັບສິນບັດຂອງບໍລິສັດ;
- ຄວາມສາມາດທາງດ້ານກົດຫມາຍຂອງບໍລິສັດໃນການປະຕິບັດສິດ ແລະພັນທະຂອງຕົນ, ອາດສາມາດເປັນໂຈດ ຫລືຈຳເລີຍເຫມືອນກັບບຸກຄົນທຳມະດາ.

**ມາດຕາ 27.** ທຸກບໍລິສັດຕ້ອງມີກົດລະບຽບຂອງຕົນເປັນລາຍລັກອັກສອນ ແລະມີເນື້ອໃນຕົ້ນຕໍດັ່ງນີ້:

- ຊື່, ນາມສະກຸນ, ອາຊີບ, ສັນຊາດ ແລະທີ່ຢູ່ຂອງຜູ້ເຂົ້າຮ່ວມລົງທຶນ;
- ຊື່, ວັດຖຸປະສົງ, ອາຍຸ ແລະສໍານັກງານຂອງບໍລິສັດ;
- ການຈັດຕັ້ງ ແລະຄຸ້ມຄອງບໍລິສັດ;
- ການແບ່ງປັນຜົນກໍາໄລ ແລະຄວາມຮັບຜິດຊອບຕໍ່ການຂາດທຶນ;
- ກອງປະຊຸມ ແລະວິທີລົງມະຕິ;
- ການຍຸບເລີກ ແລະການຊໍາລະສະສາງ;
- ວິທີແກ້ໄຂຂໍ້ຂັດແຍ່ງ.

**ມາດຕາ 28.** ໃນການເຄື່ອນໄຫວທຸລະກິດນັ້ນບໍລິສັດອາດຈະມີການປ່ຽນແປງເພື່ອໃຫ້ສອດຄ່ອງກັບສະພາບການດ້ານເສດຖະກິດເຊັ່ນ ການປ່ຽນແປງກົດລະບຽບ, ການເພີ່ມທຶນຂຶ້ນ ຫລືຫລຸດທຶນລົງ, ການຄວບບໍລິສັດເຂົ້າກັນ ຫລືການແຍກອອກຈາກກັນ, ການປ່ຽນແປງຮູບແບບບໍລິສັດ ຫລືວັດຖຸປະສົງຂອງບໍລິສັດ.

ການປ່ຽນແປງຂອງບໍລິສັດຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຂອງຂາຮຸ້ນ ແລະຜູ້ຖືຮຸ້ນ.

ການປ່ຽນແປງຂອງບໍລິສັດຕ້ອງແຈ້ງໃຫ້ເຈົ້າຫນ້າທີ່ ທີ່ກ່ຽວຂ້ອງຊາບ ເພື່ອຈົດໃສ່ໃນປື້ມທະບຽນວິສາຫະກິດ ແລະຕ້ອງແຈ້ງໃຫ້ຂາຮຸ້ນ, ຜູ້ຖືຮຸ້ນ ແລະມວນຊົນຊາບ.

ການປ່ຽນແປງຂອງບໍລິສັດຕ້ອງໄດ້ດໍາເນີນພາຍໃນຫນຶ່ງປີ ນັບແຕ່ສາເຫດຂອງການປ່ຽນ ແປງນັ້ນໄດ້ເກີດຂຶ້ນ.

**ມາດຕາ 29.** ການເພີ່ມທຶນຂຶ້ນຂອງບໍລິສັດອາດຈະດໍາເນີນດ້ວຍການຍົກເອົາຄັງສະສົມມາເພີ່ມມູນຄ່າຂອງແຕ່ລະຮຸ້ນທີ່ມີຢູ່ແລ້ວ, ດ້ວຍການເພີ່ມຈໍານວນຮຸ້ນຂຶ້ນ ຫລືດ້ວຍການຫັນເອົາເຈົ້າຫນີ້ຂອງບໍລິສັດມາເປັນຜູ້ຖືຮຸ້ນ. ໃນການເພີ່ມຈໍານວນຮຸ້ນນັ້ນຂາຮຸ້ນ ແລະຜູ້ຖືຮຸ້ນຂອງບໍລິສັດມີບູລິມະສິດກ່ອນຄົນພາຍນອກ.

ມີແຕ່ບໍລິສັດມະຫາຊົນເທົ່ານັ້ນ ຈຶ່ງສາມາດລະດົມທຶນຈາກພາຍນອກໄດ້ຢ່າງເປີດເຜີຍ ແລະຈໍາຫນ່າຍໃບຮຸ້ນກູ້.

ການຫລຸດທຶນຂອງບໍລິສັດລົງອາດຈະດໍາເນີນດ້ວຍການຫລຸດມູນຄ່າຂອງແຕ່ລະຮຸ້ນລົງ ຫລືຫລຸດຈໍານວນຮຸ້ນລົງ.

**ມາດຕາ 30.** ການຄວບບໍລິສັດເຂົ້າກັນມີສອງວິທີຄື :

- ສອງ ຫລືຫລາຍບໍລິສັດຄວບເຂົ້າກັນແລ້ວກາຍເປັນບໍລິສັດໃຫມ່;
- ສອງ ຫລືຫລາຍບໍລິສັດຄວບເຂົ້າກັນແລ້ວກາຍເປັນບໍລິສັດໃດຫນຶ່ງຂອງບໍລິສັດເຫລົ່ານັ້ນ.

ການຄວບບໍລິສັດເຂົ້າກັນນີ້ ອາດຈະຄວບບໍລິສັດຮູບແບບດຽວກັນ ຫລື ຮູບແບບຕ່າງ ກັນກໍໄດ້.

ການແຍກບໍລິສັດອອກຈາກກັນ ແມ່ນການແບ່ງບໍລິສັດໜຶ່ງອອກເປັນຫລາຍບໍລິສັດຮູບແບບດຽວກັນ ຫລືຮູບແບບຕ່າງກັນກໍໄດ້.

**ມາດຕາ 31.** ບໍລິສັດໃດໜຶ່ງຈະປ່ຽນແປງວິສາຫະກິດຂອງຕົນຈາກຮູບແບບບໍລິສັດໜຶ່ງໄປສູ່ຮູບແບບບໍລິສັດອື່ນກໍໄດ້. ການປ່ຽນແປງຮູບແບບບໍລິສັດບໍ່ແມ່ນການສ້າງນິຕິບຸກຄົນຂຶ້ນໃໝ່.

ການປ່ຽນແປງຮູບແບບບໍລິສັດຕ້ອງໃຫ້ສອດຄ່ອງກັບກົດລະບຽບຂອງຮູບແບບບໍລິສັດທີ່ຈັດຕັ້ງຂຶ້ນໃໝ່ນັ້ນເຊັ່ນ ຈຳນວນທຶນ, ຈຳນວນຂາຮຸ້ນ ແລະຜູ້ຖືຮຸ້ນເປັນຕົ້ນ.

ການປ່ຽນແປງຮູບແບບບໍລິສັດ ບໍ່ພາໃຫ້ໜີ້ສິນຂອງບໍລິສັດເກົ່າຕົກໄປ. ການປ່ຽນແປງຮູບແບບຂອງບໍລິສັດຈະພາໃຫ້ມີການເພີ່ມຄວາມຮັບຜິດຊອບຂອງຂາຮຸ້ນ ແລະຜູ້ຖືຮຸ້ນໄດ້ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກກອງປະຊຸມຂອງຂາຮຸ້ນ ແລະຜູ້ຖືຮຸ້ນເທົ່ານັ້ນ.

**ມາດຕາ 32.** ການຍຸບເລີກບໍລິສັດແມ່ນການຢຸດເຊົາດຳເນີນກິດຈະການຂອງບໍລິສັດໂດຍເດັດຂາດ. ບໍລິສັດອາດຈະຍຸບເລີກຕາມກຳນົດເວລາ ຫລືກ່ອນກຳນົດເວລາທີ່ຕົນໄດ້ວາງໄວ້ກໍໄດ້. ການຍຸບເລີກບໍລິສັດຕ້ອງແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ, ຂາຮຸ້ນ, ຜູ້ຖືຮຸ້ນ, ເຈົ້າໜີ້ ແລະປະກາດໃຫ້ມວນຊົນຊາບ.

ບໍລິສັດຕ່າງໆອາດຈະຖືກຍຸບເລີກຍ້ອນສາເຫດທົ່ວໄປດັ່ງນີ້ :

- ຄົບອາຍຸທີ່ໄດ້ກຳນົດໄວ້ໃນກົດລະບຽບ;
- ໄດ້ບັນລຸວັດຖຸປະສົງຂອງບໍລິສັດແລ້ວ;
- ຂາຮຸ້ນ ແລະຜູ້ຖືຮຸ້ນລົງມະຕິຍຸບເລີກກ່ອນອາຍຸຂອງບໍລິສັດ;
- ເຄື່ອນໄຫວບໍ່ໄດ້ຕາມວັດຖຸປະສົງ;
- ບໍ່ສາມາດດຳເນີນກິດຈະການຕໍ່ໄປໄດ້ຍ້ອນຂາດທຶນເປັນຕົ້ນ;
- ການລົບລ້າງສັນຍາບໍລິສັດ;
- ຄຳຕັດສິນຂອງສານໃຫ້ຍຸບເລີກ;
- ການລົ້ມລະລາຍ.

ນອກຈາກສາເຫດຍຸບເລີກທີ່ກ່າວມາຂ້າງເທິງນັ້ນແລ້ວ ສຳລັບບໍລິສັດຮຸ້ນສ່ວນຍັງມີສາເຫດຍຸບເລີກສະເພາະເຊັ່ນ ຂາຮຸ້ນຜູ້ໃດຜູ້ໜຶ່ງຖືກລົ້ມລະລາຍ ຫລື ຖືກຫ້າມດຳເນີນທຸລະກິດ, ຂາດຄວາມສາມາດທາງດ້ານການປະພຶດ, ເສັຽຊີວິດ, ເວັ້ນເສັຽແຕ່ກົດລະບຽບຫາກໄດ້ບົ່ງໄວ້ຢ່າງອື່ນ.

## ໝວດທີ 3
## ວິສາຫະກິດເອກະຊົນ

**ມາດຕາ 33.** ວິສາຫະກິດເອກະຊົນ ແມ່ນຫົວໜ່ວຍທຸລະກິດຊຶ່ງບຸກຄົນ ຫລືນິຕິບຸກຄົນເປັນຜູ້ສ້າງຕັ້ງຂຶ້ນ ເພື່ອເຄື່ອນໄຫວຫາຜົນກໍາໄລ.

ວິສາຫະກິດເອກະຊົນອາດຈະສ້າງຕັ້ງຂຶ້ນຕາມສອງຮູບການດັ່ງຕໍ່ໄປນີ້ຄື: ວິສາຫະກິດສ່ວນບຸກຄົນ ແລະບໍລິສັດ.

**I. ວິສາຫະກິດສ່ວນບຸກຄົນ.**

**ມາດຕາ 34.** ວິສາຫະກິດສ່ວນບຸກຄົນ ແມ່ນຫົວໜ່ວຍທຸລະກິດທີ່ມີທຶນຈົດທະບຽນແຕ່ 1.000.000 ກີບຂຶ້ນໄປຊຶ່ງບຸກຄົນຜູ້ດຽວເປັນຜູ້ສ້າງຕັ້ງຂຶ້ນ ແລະຮັບຜິດຊອບແຕ່ຜູ້ດຽວຕໍ່ໜີ້ສິນທັງໝົດ ຂອງວິສາຫະກິດ. ວິສາຫະກິດສ່ວນບຸກຄົນ ເຄື່ອນໄຫວໃນນາມສ່ວນຕົວຂອງເຈົ້າຂອງວິສາຫະກິດເອງ.

**ມາດຕາ 35.** ຊື່ຂອງວິສາຫະກິດສ່ວນບຸກຄົນອາດຈະໃສ່ຕາມຊື່ຂອງເຈົ້າຂອງວິສາຫະກິດເອງ ຫລືຕາມຂະແໜງທຸລະກິດ ແລະ ອື່ນໆກໍໄດ້. ໃນເອກະສານຂອງວິສາຫະກິດນັ້ນຕ້ອງບົ່ງແຈ້ງວ່າ " ວິສາຫະກິດສ່ວນບຸກຄົນ ".

**ມາດຕາ 36.** ເຈົ້າຂອງວິສາຫະກິດສ່ວນບຸກຄົນເປັນຜູ້ຄຸ້ມຄອງການເຄື່ອນໄຫວວິສາຫະກິດຂອງຕົນ ຫລືຈະໃຫ້ຜູ້ອື່ນມາຄຸ້ມຄອງແທນຕົນກໍໄດ້ ແຕ່ເຈົ້າຂອງວິສາຫະກິດຕ້ອງຮັບຜິດຊອບຕໍ່ການເຄື່ອນໄຫວວິສາຫະກິດດັ່ງກ່າວ.

ເຈົ້າຂອງວິສາຫະກິດເປັນຜູ້ຕົກລົງກ່ຽວກັບການນໍາໃຊ້ຜົນກໍາໄລທີ່ໄດ້ຮັບ ແລະ ກ່ຽວກັບບັນຫາອື່ນໆແຕ່ຜູ້ດຽວ.

**ມາດຕາ 37.** ວິສາຫະກິດສ່ວນບຸກຄົນອາດຈະປ່ຽນແປງວັດຖຸປະສົງ ຫລືຂະແໜງທຸລະກິດຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງເສັຽກ່ອນ ແລະ ແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດຊາບ ເຈົ້າຂອງວິສາຫະກິດສ່ວນບຸກຄົນຈະຂໍອະນຸຍາດຍຸບເລີກວິສາຫະກິດຂອງຕົນຕໍ່ ເຈົ້າໜ້າທີ່ທະບຽນວິສາຫະກິດກໍໄດ້ ແຕ່ຕ້ອງແຈ້ງໃຫ້ເຈົ້າໜີ້ຊາບ ແລະຮັບປະກັນການຊໍາລະສະສາງໜີ້ສິນທັງໝົດຂອງວິສາຫະກິດຕົນ.

**II. ບໍລິສັດຮຸ້ນສ່ວນ**

**ມາດຕາ 38.** ບໍລິສັດຮຸ້ນສ່ວນແມ່ນຮູບແບບຂອງບໍລິສັດໜຶ່ງ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນໂດຍອີງໃສ່ຄວາມເຊື່ອໃຈລະຫວ່າງຂາຮຸ້ນດ້ວຍກັນເປັນຕົ້ນຕໍ.

ຂາຮຸ້ນຂອງບໍລິສັດຮຸ້ນສ່ວນທຸກຄົນມີຖານະເປັນນັກທຸລະກິດ ແລະ ຮັບຜິດຊອບຮ່ວມກັນຕໍ່ໜີ້ສິນທັງໝົດຂອງບໍລິສັດໂດຍບໍ່ມີຂອບເຂດ.

**ມາດຕາ 39.** ບໍລິສັດອາດຈະເອົາຊື່ຂອງຂາຮຸ້ນຜູ້ຫນຶ່ງ ຫລືຫລາຍຄົນມາເປັນຊື່ຂອງບໍລິສັດ ຫລື ຈະໃສ່ຊື່ແນວອື່ນກໍໄດ້ ແຕ່ຊື່ຂອງບໍລິສັດຕ້ອງມີຄໍາວ່າ " ບໍລິສັດຮຸ້ນສ່ວນ " ຕິດນໍາ.

ທຶນຂອງບໍລິສັດ ແມ່ນໄດ້ມາຈາກການປະກອບຂອງຂາຮຸ້ນ. ການປະກອບທຶນອາດຈະປະກອບເປັນເງິນ, ເປັນວັດຖຸ, ເປັນແຮງງານ ຫລືເປັນຊັບສິນທາງຫົວຄິດປັນຍາ ຊຶ່ງຕ້ອງຕີມູນຄ່າເປັນເງິນ.

ການປະກອບທຶນ ແລະການຖອກຮຸ້ນຕ້ອງປະຕິບັດຕາມການກໍານົດຂອງຜູ້ຈັດການບໍລິສັດ.

ໃບຮຸ້ນຂອງບໍລິສັດຮຸ້ນສ່ວນບໍ່ສາມາດປ່ຽນມືໄດ້.

**ມາດຕາ 40.** ຂາຮຸ້ນທັງຫມົດສາມາດເປັນຜູ້ຈັດການຮ່ວມກັນ ເວັ້ນເສັຽແຕ່ກົດລະບຽບຂອງບໍລິສັດຫາກໄດ້ບົ່ງໄວ້ຢ່າງອື່ນ.

ໃນກໍລະນີທີ່ຜູ້ຈັດການ ຫາກບໍ່ແມ່ນຂາຮຸ້ນນັ້ນ ການແຕ່ງຕັ້ງຜູ້ກ່ຽວຕ້ອງໄດ້ຮັບຄໍາເຫັນດີເປັນເອກະພາບຈາກຂາຮຸ້ນທັງຫມົດ ຖ້າວ່າກົດລະບຽບຫາກບໍ່ໄດ້ບົ່ງໄວ້ຢ່າງອື່ນ.

**ມາດຕາ 41.** ໃນການພົວພັນກັບຂາຮຸ້ນນັ້ນຜູ້ຈັດການມີສິດດໍາເນີນທຸກກິດຈະການຄຸ້ມຄອງເພື່ອຜົນປະໂຫຍດຂອງບໍລິສັດເວັ້ນເສັຽແຕ່ກົດລະບຽບຫາກບົ່ງໄວ້ຢ່າງອື່ນ.

ສ່ວນການເຄື່ອນໄຫວຂອງຜູ້ຈັດການທີ່ພົວພັນກັບບຸກຄົນພາຍນອກ ຊຶ່ງກ່ຽວຂ້ອງກັບວັດຖຸປະສົງຂອງບໍລິສັດນັ້ນລ້ວນແຕ່ຕົກຢູ່ໃນຄວາມຮັບຜິດຊອບຂອງບໍລິສັດ.

ຜູ້ຈັດການຕ້ອງຮັບຜິດຊອບຕາມກົດຫມາຍຕໍ່ບໍລິສັດໃນກໍລະນີທີ່ມີຄວາມຜິດພາດສ່ວນຕົວໃນການຄຸ້ມຄອງ ຊຶ່ງພາໃຫ້ບໍລິສັດໄດ້ຮັບຄວາມເສັຽຫາຍເຊັ່ນ: ການໃຊ້ອໍານາດເກີນຂອບເຂດ,ການລະເມີດກົດລະບຽບຂອງບໍລິສັດ.

ຜູ້ຈັດການທີ່ເປັນຂາຮຸ້ນຈະຖືກປົດຕໍາແຫນ່ງໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄໍາເຫັນດີເປັນເອກະສັນຈາກບັນດາຂາຮຸ້ນ, ຜູ້ກ່ຽວເອງບໍ່ມີສິດລົງຄະແນນສຽງ.

ສ່ວນຜູ້ຈັດການທີ່ບໍ່ເປັນຂາຮຸ້ນນັ້ນຈະຖືກປົດຕໍາແຫນ່ງຕາມທີ່ກົດລະບຽບຂອງບໍລິສັດໄດ້ບົ່ງໄວ້.

**ມາດຕາ 42.** ບໍລິສັດຮຸ້ນສ່ວນອາດຈະມີເຈົ້າຫນ້າທີ່ກວດສອບບັນຊີ.ເຈົ້າຫນ້າທີ່ກວດສອບບັນຊີມີຫນ້າທີ່ກວດກາບັນຊີ ແລະຢັ້ງຢືນຄວາມຖືກຕ້ອງຕາມຕົວຈິງ ແລະ ຕາມລະບຽບຫລັກການຂອງເອກະສານບັນຊີ, ເຮັດບົດລາຍງານສະເຫນີຕໍ່ກອງປະຊຸມຂາຮຸ້ນ.

ເຈົ້າຫນ້າທີ່ກວດສອບບັນຊີຖືກແຕ່ງຕັ້ງໂດຍກອງປະຊຸມຂາຮຸ້ນ.

**ມາດຕາ 43.** ຂາຮຸ້ນທຸກຄົນມີສິດ ແລະຫນ້າທີ່ດັ່ງນີ້ :

- ເຂົ້າຮ່ວມໃນການຄຸ້ມຄອງບໍລິສັດ;
- ໄດ້ຮັບການແບ່ງປັນຜົນກໍາໄລ;
- ຮັບຊາບກ່ຽວກັບການເຄື່ອນໄຫວຕ່າງໆຂອງບໍລິສັດ;
- ຮັບຊາບບົດລາຍງານຂອງເຈົ້າຫນ້າທີ່ກວດສອບບັນຊີ;

- ໄດ້ຮັບເອກະສານຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນ ກ່ອນວັນນັດປະຊຸມປະຈຳປີ;

- ຕັ້ງຄຳຖາມ ແລະສະເໜີຄວາມຄິດຄວາມເຫັນເປັນລາຍລັກອັກສອນກ່ຽວກັບການຄຸ້ມຄອງບໍລິສັດຕໍ່ຜູ້ຈັດການ;

- ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງ.

ຂາຮຸ້ນບໍ່ມີສິດດຳເນີນທຸລະກິດຂະແໜງດຽວກັນ ກັບ ບໍລິສັດຮຸ້ນສ່ວນຂອງຕົນ ເວັ້ນເສັຽແຕ່ຜູ້ກ່ຽວຫາກໄດ້ດຳເນີນທຸລະກິດນັ້ນມາກ່ອນແລ້ວ ແລະພາຍຫລັງທີ່ບໍລິສັດໄດ້ຖືກສ້າງຕັ້ງຂຶ້ນແລ້ວກໍບໍ່ໄດ້ມີການທັກທ້ວງ.

ຂາຮຸ້ນທຸກຄົນມີຄວາມຮັບຜິດຊອບຮ່ວມກັນໂດຍບໍ່ມີຂອບເຂດຕໍ່ໜີ້ສິນຂອງບໍລິສັດ. ຂາຮຸ້ນທີ່ເຂົ້າມາໃໝ່ຕ້ອງຮັບຜິດຊອບຕໍ່ໜີ້ສິນຂອງບໍລິສັດທີ່ມີມາແຕ່ກ່ອນ ແລະຂາຮຸ້ນທີ່ອອກຈາກບໍລິສັດໄປແລ້ວກໍຍັງຕ້ອງຮັບຜິດຊອບຕໍ່ໜີ້ສິນຂອງບໍລິສັດທີ່ໄດ້ມີກ່ອນຕົນຖອນຮຸ້ນ.

**ມາດຕາ 44.** ກອງປະຊຸມຂາຮຸ້ນໄຂຂຶ້ນຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຢ່າງໜ້ອຍປີລະຄັ້ງ. ຜູ້ຈັດການຮຽກໂຮມກອງປະຊຸມຢ່າງຊ້າສິບຫ້າວັນກ່ອນວັນໄຂປະຊຸມ ພ້ອມທັງແຈ້ງລາຍການປະຊຸມໄປພ້ອມ.

ກອງປະຊຸມຂາຮຸ້ນ ມີໜ້າທີ່ພິຈາລະນາທຸກບັນຫາ ກ່ຽວກັບການເຄື່ອນໄຫວຂອງບໍລິສັດເປັນຕົ້ນ ກ່ຽວກັບການແຕ່ງຕັ້ງ ຫລືປົດຕຳແໜ່ງຜູ້ຈັດການ, ການກຳນົດອາຍຸການ ແລະ ເງິນເດືອນຂອງ ຜູ້ຈັດການ, ການວາງລະບຽບການເງິນຂອງບໍລິສັດ, ການແຕ່ງຕັ້ງເຈົ້າໜ້າທີ່ກວດສອບບັນຊີ, ການຮັບຮອງເອົາບັນຊີປະຈຳປີ, ການແບ່ງປັນຜົນກຳໄລ, ການໂອນຮຸ້ນ, ການສືບຕໍ່ ຫລືຍຸບເລີກບໍລິສັດ ແລະການປ່ຽນແປງກົດລະບຽບ.

ການລົງມະຕິກ່ຽວກັບບັນຫາສຳຄັນຕ່າງໆ ຂອງບໍລິສັດຮຸ້ນສ່ວນຕ້ອງໄດ້ຮັບຄວາມເຫັນດີເປັນເອກະສັນໃນກອງປະຊຸມຂາຮຸ້ນ ເວັ້ນເສັຽແຕ່ກົດລະບຽບຫາກໄດ້ບົ່ງໄວ້ຢ່າງອື່ນ.

ບັນດາບັນຫາທີ່ຕ້ອງຕົກລົງເຫັນດີເປັນເອກະສັນມີດັ່ງນີ້ :

- ການປົດຕຳແໜ່ງຜູ້ຈັດການທີ່ເປັນຂາຮຸ້ນ, ຜູ້ກ່ຽວເອງບໍ່ມີສິດລົງຄະແນນສຽງ;
- ການພິຈາລະນາກ່ຽວກັບການສືບຕໍ່ ຫລືຍຸບເລີກບໍລິສັດໃນກໍລະນີທີ່ຜູ້ຈັດການຜູ້ໃດຜູ້ໜຶ່ງ ທີ່ຂາຮຸ້ນຫາກຖືກປົດຕຳແໜ່ງ ຫລືໃນກໍລະນີທີ່ຂາຮຸ້ນຜູ້ໃດຜູ້ໜຶ່ງຫາກໝົດຖານະເປັນນັກທຸລະກິດ;
- ການໂອນຮຸ້ນໃຫ້ຜູ້ທີ່ບໍ່ແມ່ນຂາຮຸ້ນ;
- ແລະການປ່ຽນແປງກົດລະບຽບຂອງບໍລິສັດ.

### III. ບໍລິສັດຈຳກັດ

**ມາດຕາ 45.** ບໍລິສັດຈຳກັດ ແມ່ນຮູບແບບບໍລິສັດໜຶ່ງ ຊຶ່ງສ້າງຕັ້ງຂຶ້ນດ້ວຍຮູບການແບ່ງທຶນເປັນຮຸ້ນ ແຕ່ລະຮຸ້ນມີມູນຄ່າເທົ່າກັນ ໂດຍມີຜູ້ຖືຮຸ້ນໃນການລິເລີ່ມສ້າງຕັ້ງບໍລິສັດແຕ່ສອງຄົນຂຶ້ນໄປ. ຜູ້

ຖືຮຸ້ນຂອງບໍລິສັດຈຳກັດມີຈຳນວນທັງຫມົດບໍ່ເກີນຊາວຄົນ ຊຶ່ງມີຄວາມຮັບຜິດຊອບຕໍ່ຫນີ້ສິນບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນຖອກເຕັມເທົ່ານັ້ນ.

ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງມີຖານະເປັນນັກທຸລະກິດ.

**ມາດຕາ 46.** ຮຸ້ນຂອງບໍລິສັດຈຳກັດອາດຈະປະກອບເປັນເງິນ ຫລືວັດຖຸກໍໄດ້. ຮຸ້ນທີ່ເປັນວັດຖຸຕ້ອງໄດ້ມອບໃນມື້ສ້າງຕັ້ງບໍລິສັດໂລດ ແລະ ຕ້ອງໄດ້ຕີມູນຄ່າເປັນເງິນໂດຍຄະນະກວດກາການປະກອບຮຸ້ນ ຫລືກອງປະຊຸມສ້າງຕັ້ງບໍລິສັດ. ຮຸ້ນທີ່ປະກອບເປັນເງິນຕ້ອງໄດ້ຖອກຢ່າງຫນ້ອຍຫ້າສິບສ່ວນຮ້ອຍຂອງມູນຄ່າຮຸ້ນ ທີ່ຕ້ອງປະກອບໃນມື້ສ້າງຕັ້ງບໍລິສັດ. ສ່ວນທີ່ຍັງເຫລືອຕ້ອງຖອກພາຍໃນກຳນົດສອງປີ ນັບແຕ່ມື້ບໍລິສັດໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

**ມາດຕາ 47.** ຮຸ້ນຂອງບໍລິສັດຈຳກັດຈະໂອນໃຫ້ຄົນພາຍໃນ ຫຼືຄົນພາຍນອກບໍລິສັດກໍໄດ້.

ສຳລັບການໂອນຮຸ້ນໃຫ້ຄົນພາຍນອກບໍລິສັດນັ້ນຕ້ອງໄດ້ຮັບຄວາມເຫັນດີໂດຍສຽງສ່ວນຫລາຍຂອງຜູ້ຖືຮຸ້ນ ຊຶ່ງຕາງຫນ້າຢ່າງຫນ້ອຍໃຫ້ສອງສ່ວນສາມຂອງທຶນບໍລິສັດ.

ໃບຮຸ້ນຂອງບໍລິສັດຈຳກັດບໍ່ສາມາດປ່ຽນມືໄດ້.

**ມາດຕາ 48.** ຊື່ຂອງບໍລິສັດຈຳກັດອາດໃສ່ຕາມວັດຖຸປະສົງ ຫລືຕາມຂະແຫນງທຸລະກິດຂອງບໍລິສັດກໍໄດ້, ແຕ່ຕ້ອງມີຄຳວ່າ " ບໍລິສັດຈຳກັດ " ຕື່ມໃສ່ນຳ.

ທຶນຈົດທະບຽນຕ່ຳສຸດຂອງບໍລິສັດຈຳກັດແມ່ນບໍ່ໃຫ້ຫລຸດ 5.000.000 ກີບ ເວັ້ນເສັຍແຕ່ລັດຖະບານໄດ້ກຳນົດໄວ້ສູງກວ່ານີ້ສຳລັບບາງທຸລະກິດ.

ບໍລິສັດຈະນຳໃຊ້ທຶນທີ່ມາຈາກການປະກອບຮຸ້ນໄດ້ກໍຕໍ່ເມື່ອບໍລິສັດຫາກໄດ້ຂຶ້ນທະບຽນວິສາຫະກິດແລ້ວເທົ່ານັ້ນ.

**ມາດຕາ 49.** ການຄຸ້ມຄອງບໍລິສັດຈຳກັດແມ່ນດຳເນີນໂດຍຜູ້ຈັດການຜູ້ໜຶ່ງ ຫລືຫລາຍຄົນ.

ຜູ້ຈັດການຖືກແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ ຫລືຕາມກົດລະບຽບຂອງບໍລິສັດ. ຜູ້ຈັດການອາດຈະຖືກຄັດເລືອກເອົາໃນບັນດາຜູ້ຖືຮຸ້ນ ຫລືຄົນພາຍນອກກໍໄດ້.

ອາຍຸການຂອງຜູ້ຈັດການແມ່ນກຳນົດຕາມຄຳຕົກລົງຂອງກອງປະຊຸມຜູ້ຖືຮຸ້ນໃນເວລາສ້າງຕັ້ງບໍລິສັດ ຫລືໃນເວລາດຳເນີນງານຂອງບໍລິສັດ.

ເງິນເດືອນຂອງຜູ້ຈັດການ ແມ່ນກຳນົດໂດຍກົດລະບຽບ ຫລືໂດຍກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 50.** ຜູ້ຈັດການມີສິດລົງລາຍເຊັນໃນນາມບໍລິສັດ.ລາຍເຊັນໃດຫາກບໍ່ມີສ່ວນກ່ຽວຂ້ອງກັບວັດຖຸປະສົງຂອງບໍລິສັດແລ້ວກໍຖືວ່າເປັນໂມຄະສຳລັບບໍລິສັດ. ຜູ້ຈັດການມີສິດໃນການດຳເນີນກິດຈະການທີ່ກ່ຽວຂ້ອງກັບວັດຖຸປະສົງຂອງບໍລິສັດ ຊຶ່ງບົ່ງໄວ້ໃນກົດລະບຽບເຊັ່ນ ມີສິດກູ້ຢືມ ແລະ ໃຫ້ກູ້ຢືມ.

ໃນການພົວພັນກັບຜູ້ຖືຮຸ້ນ ຜູ້ຈັດການມີສິດດຳເນີນທຸກກິດຈະການຄຸ້ມຄອງເພື່ອຜົນປະໂຫຍດຂອງບໍລິສັດ ເວັ້ນເສັຽແຕ່ກົດລະບຽບຫາກໄດ້ບົ່ງໄວ້ຢ່າງອື່ນ.

ຜູ້ຈັດການຕ້ອງປະຕິບັດຕາມມະຕິກົກລົງຂອງກອງປະຊຸມຜູ້ຖືຮຸ້ນ.

ຜູ້ຈັດການມີພັນທະໃຊ້ຄວາມສາມາດຂອງຕົນດຳເນີນວຽກງານຂອງບໍລິສັດ ແລະ ບໍ່ມີສິດເຄື່ອນໄຫວໃນສິ່ງທີ່ເປັນການລະເມີດກົດຫມາຍ ຫລືກົດລະບຽບຂອງບໍລິສັດ.

**ມາດຕາ 51.** ຜູ້ຈັດການຕ້ອງຮັບຜິດຊອບຕໍ່ບໍລິສັດ ແລະຕໍ່ບຸກຄົນພາຍນອກຕາມກົດຫມາຍໃນກໍລະນີທີ່ຕົນໄດ້ລະເມີດກົດຫມາຍສະບັບນີ້, ລະເມີດກົດລະບຽບຂອງບໍລິສັດ, ໄດ້ມີຄວາມຜິດພາດໃນການຄຸ້ມຄອງບໍລິສັດຊຶ່ງພາໃຫ້ເກີດຄວາມເສັຽຫາຍ.

ຜູ້ຈັດການຈະຖືກປົດຕຳແຫ່ນງ ໂດຍມະຕິກົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຊຶ່ງຕາງຫນ້າໃຫ້ຫລາຍກວ່າເຄິ່ງຫນຶ່ງຂອງຈຳນວນຮຸ້ນທັງຫມົດຂອງບໍລິສັດ.

**ມາດຕາ 52.** ບໍລິສັດຈຳກັດທີ່ມີທຶນແຕ່ 100.000.000 ກີບຂຶ້ນໄປແລ້ວໃຫ້ມີເຈົ້າຫນ້າທີ່ກວດສອບບັນຊີຫນຶ່ງຄົນ.

ເຈົ້າຫນ້າທີ່ກວດສອບບັນຊີໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນໂດຍເລືອກເອົາໃນບັນຊີລາຍຊື່ຜູ້ທີ່ໄດ້ຈົດທະບຽນນຳອົງການຈັດຕັ້ງວິຊາຊີບການບັນຊີ.

ເຈົ້າຫນ້າທີ່ກວດສອບບັນຊີມີອາຍຸການສາມປີ ແລະ ສາມາດຖືກ ແຕ່ງຕັ້ງຄືນໃຫມ່ໄດ້.

ເຈົ້າຫນ້າທີ່ກວດສອບບັນຊີມີຫນ້າທີ່ :

- ກວດກາບັນຊີ ແລະຢັ້ງຢືນຄວາມຖືກຕ້ອງຂອງເອກະສານບັນຊີ;
- ເຮັດບົດລາຍງານແລ້ວສະເຫນີຕໍ່ກອງປະຊຸມປະຈຳປີ ແລະສົ່ງບົດລາຍງານຫຍໍ້ໃຫ້ບັນດາຜູ້ຖືຮຸ້ນຢ່າງຊ້າສິບຫ້າວັນກ່ອນວັນເປີດປະຊຸມ;
- ເຈົ້າຫນ້າທີ່ກວດສອບບັນຊີມີສິດທວງເອົາເອກະສານຕ່າງໆ ທີ່ກ່ຽວຂ້ອງຈາກທຸກພາກ ສ່ວນຂອງບໍລິສັດ.

ກອງປະຊຸມຜູ້ຖືຮຸ້ນເປັນຜູ້ກຳນົດຄ່າກວດສອບຂອງເຈົ້າຫນ້າທີ່ກວດສອບບັນຊີ.

ໃນການປະຕິບັດວຽກງານຂອງຕົນນັ້ນ,ເຈົ້າຫນ້າທີ່ກວດສອບບັນຊີຕ້ອງຮັບຜິດຊອບຕໍ່ຫນ້າກົດຫມາຍ ແລະຈັນຍາບັນທີ່ອົງການຈັດຕັ້ງວິຊາຊີບການບັນຊີໄດ້ກຳນົດໄວ້.

ເຈົ້າຫນ້າທີ່ກວດສອບບັນຊີ ປະຕິບັດຫນ້າທີ່ວຽກງານຂອງຕົນ ຢ່າງເປັນເອກະລາດ, ມີແຕ່ສານຫລືອົງການຈັດຕັ້ງວິຊາຊີບການບັນຊີເທົ່ານັ້ນຈຶ່ງສາມາດປົດຕຳແຫນ່ງຂອງຜູ້ກ່ຽວໄດ້.

**ມາດຕາ 53.** ຜູ້ຖືຮຸ້ນມີສິດ ແລະຫນ້າທີ່ດັ່ງນີ້ :

- ໄດ້ຮັບການແບ່ງປັນຜົນກຳໄລຕາມອັດຕາສ່ວນຂອງຮຸ້ນທີ່ຕົນປະກອບ;
- ໄດ້ຮັບຊາບບັນຫາຕ່າງໆ ກ່ຽວກັບການເຄື່ອນໄຫວຂອງບໍລິສັດ;
- ໄດ້ຮັບເອກະສານຢ່າງຊ້າສິບຫ້າວັນກ່ອນວັນໄຂກອງປະຊຸມປະຈຳປີ;

- ຕັ້ງຄຳຖາມ ແລະ ສະເໜີຄວາມຄິດຄວາມເຫັນເປັນລາຍລັກອັກສອນ ກ່ຽວກັບການຄຸ້ມຄອງບໍລິສັດຕໍ່ຜູ້ຈັດການ;
- ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະລົງຄະແນນສຽງໂດຍຖືເອົາໜຶ່ງຮຸ້ນຕໍ່ໜຶ່ງຄະແນນ;
- ຜູ້ຖືຮຸ້ນ ຊຶ່ງຕາງໜ້າໃຫ້ມູນຄ່າຮຸ້ນເຄິ່ງໜຶ່ງຂອງທຶນບໍລິສັດກໍມີສິດຮຽກໂຮມກອງປະຊຸມ;
- ຜູ້ຖືຮຸ້ນບໍ່ມີສິດຖອນຮຸ້ນຂອງຕົນ ມີແຕ່ສິດໂອນຮຸ້ນໃຫ້ຜູ້ອື່ນເທົ່ານັ້ນ;
- ຜູ້ຖືຮຸ້ນຕ້ອງຖອກຮຸ້ນຂອງຕົນຕາມກຳນົດເວລາ;
- ຜູ້ຖືຮຸ້ນຮັບຜິດຊອບຕໍ່ໜີ້ສິນຂອງບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນໄດ້ຖອກເຕັມເທົ່ານັ້ນ.

**ມາດຕາ 54.** ກອງປະຊຸມຜູ້ຖືຮຸ້ນໄຂຂຶ້ນຢ່າງໜ້ອຍປີລະຄັ້ງ. ນອກຈາກນີ້ກອງປະຊຸມຜູ້ຖືຮຸ້ນຈະໄຂຂຶ້ນຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານບໍລິສັດກໍໄດ້.

ກອງປະຊຸມຈະໄຂຂຶ້ນໄດ້ກໍຕໍ່ເມື່ອຫາກມີຜູ້ຖືຮຸ້ນ ແລະຜູ້ຕາງໜ້າຜູ້ຖືຮຸ້ນເຂົ້າຮ່ວມຊຶ່ງມີທຶນຫລາຍກວ່າເຄິ່ງໜຶ່ງຂອງທຶນບໍລິສັດ.

ຜູ້ຈັດການຮຽກໂຮມກອງປະຊຸມຢ່າງຊ້າ ສິບຫ້າວັນ ກ່ອນວັນໄຂປະຊຸມພ້ອມທັງແຈ້ງລາຍການປະຊຸມໄປພ້ອມ.

ນອກຈາກນີ້ກອງປະຊຸມອາດຈະຖືກຮຽກໂຮມໂດຍ :
- ເຈົ້າໜ້າທີ່ກວດສອບບັນຊີ;
- ຜູ້ຖືຮຸ້ນ ຊຶ່ງຕາງໜ້າໃຫ້ຢ່າງໜ້ອຍເຄິ່ງໜຶ່ງຂອງທຶນບໍລິສັດ;
- ຜູ້ຖືກແຕ່ງຕັ້ງຈາກສານຕາມຄຳຮ້ອງຂໍຂອງຜູ້ຖືຮຸ້ນ;
- ຜູ້ອຸ້ມຊູບໍລິສັດຊົ່ວຄາວຊຶ່ງຖືກແຕ່ງຕັ້ງຈາກສານ ໃນກໍລະນີທີ່ບໍລິສັດຫາກພົບຄວາມຫຍຸ້ງຍາກ;
- ຜູ້ຊຳລະສະສາງ.

ມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນຈະມີຜົນສັກສິດໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງທີ່ມີທຶນຫລາຍກວ່າເຄິ່ງໜຶ່ງຂອງທຶນບໍລິສັດ ເວັ້ນເສຍແຕ່ການຕົກລົງກ່ຽວກັບການປ່ຽນແປງກົດລະບຽບ ແລະການຮັບຮອງເອົາຜູ້ຖືຮຸ້ນໃໝ່ຊຶ່ງຕ້ອງໄດ້ຮັບຄະແນນສຽງສອງສ່ວນສາມຂອງທຶນບໍລິສັດ.

**ມາດຕາ 55.** ກອງປະຊຸມຜູ້ຖືຮຸ້ນມີໜ້າທີ່ :
- ແຕ່ງຕັ້ງ ຫລືປົດຕຳແໜ່ງຜູ້ຈັດການ;
- ແຕ່ງຕັ້ງເຈົ້າໜ້າທີ່ກວດສອບບັນຊີ;
- ລົງມະຕິກ່ຽວກັບການດຳເນີນງານຕ່າງໆຂອງບໍລິສັດໃນປີຜ່ານມາ ແລະແຜນການໃນປີຕໍ່ໄປ;
- ຮັບຮອງເອົາບັນຊີປະຈຳປີ;
- ຮັບຮອງເອົາການແບ່ງປັນຜົນກຳໄລ.

**ມາດຕາ 56.** ກອງປະຊຸມຜູ້ຖືຮຸ້ນຈະປ່ຽນແປງກົດລະບຽບຂອງບໍລິສັດກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຈາກຜູ້ຖືຮຸ້ນ ຊຶ່ງຕາງຫນ້າຢ່າງຫນ້ອຍໃຫ້ສອງສ່ວນສາມຂອງທຶນບໍລິສັດ.

**ມາດຕາ 57.** ບໍລິສັດຈຳກັດ-ຜູ້ດຽວ ແມ່ນຫົວຫນ່ວຍທຸລະກິດທີ່ສ້າງຕັ້ງຂຶ້ນໂດຍບຸກຄົນແຕ່ພຽງຜູ້ດຽວ ແລະຕ້ອງມີທຶນຈົດທະບຽນ ແຕ່ 5.000.000 ກີບຂຶ້ນໄປ ແລະ ຮັບຜິດຊອບຕໍ່ຫນີ້ສິນຂອງບໍລິສັດບໍ່ເກີນມູນຄ່າທຶນຈົດທະບຽນຂອງບໍລິສັດ.

ຜູ້ຖືຮຸ້ນຂອງບໍລິສັດຈຳກັດ-ຜູ້ດຽວ ອາດຈະແມ່ນບຸກຄົນ ຫລືນິຕິບຸກຄົນກໍໄດ້. ຜູ້ຖືຮຸ້ນຂອງບໍລິສັດຈຳກັດຜູ້ດຽວ ຊຶ່ງເປັນບຸກຄົນຜູ້ດຽວແມ່ນບໍ່ມີສິດສ້າງຕັ້ງຫລາຍບໍລິສັດຈຳກັດ-ຜູ້ດຽວ ຂຶ້ນໄດ້.

**ມາດຕາ 58.** ຜູ້ຈັດການຂອງບໍລິສັດຈຳກັດ-ຜູ້ດຽວ ອາດຈະແມ່ນຜູ້ຖືຮຸ້ນເອງ ຫລືບຸກຄົນພາຍນອກກໍໄດ້.ໃນກໍລະນີທີ່ຜູ້ຖືຮຸ້ນຫາກແມ່ນນິຕິບຸກຄົນແລ້ວ ຜູ້ຈັດການຕ້ອງແມ່ນບຸກຄົນພາຍນອກ.

ຜູ້ຈັດການທີ່ເປັນຜູ້ຖືຮຸ້ນມີສິດດຳເນີນທຸກກິດຈະການຂອງບໍລິສັດ ແລະ ມີສິດຕົກລົງທຸກບັນຫາຂອງບໍລິສັດໄດ້. ສ່ວນຜູ້ຈັດການທີ່ບໍ່ແມ່ນຜູ້ຖືຮຸ້ນນັ້ນ ກ່ອນຈະຕົກລົງບັນຫາສຳຄັນໃດຫນຶ່ງຂອງບໍລິສັດຕ້ອງໄດ້ຮັບຄວາມເຫັນດີຈາກຜູ້ຖືຮຸ້ນເສັຽກ່ອນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ.

ການຕົກລົງຂອງຜູ້ຈັດການຕ້ອງໄດ້ບັນທຶກເຂົ້າໃນປື້ມບັນທຶກຂອງບໍລິສັດຕາມລະບຽບການ.

**ມາດຕາ 59.** ຜູ້ຖືຮຸ້ນຂອງບໍລິສັດຈຳກັດ-ຜູ້ດຽວ ອາດຈະມອບສິດດຳເນີນກິດຈະການຂອງບໍລິສັດທັງຫມົດ ຫລືບາງສ່ວນໃຫ້ຄົນພາຍນອກກໍໄດ້.

ໃນກໍລະນີທີ່ຜູ້ຖືຮຸ້ນຂອງບໍລິສັດຈຳກັດ-ຜູ້ດຽວ ຫາກເສັຽຊີວິດ ບໍລິສັດກໍຈະສືບຕໍ່ດຳເນີນກິດຈະການຕໍ່ໄປໂດຍຜູ້ສືບທອດຜູ້ຫນຶ່ງ ຫລື ຫລາຍຄົນ ເວັ້ນເສັຽແຕ່ກົດລະບຽບຂອງບໍລິສັດຫາກໄດ້ບົ່ງໄວ້ຢ່າງອື່ນ. ຖ້າຜູ້ສືບທອດຫາກມີຫລາຍຄົນແລ້ວ ບໍລິສັດຈຳກັດ-ຜູ້ດຽວ ກໍຈະປ່ຽນຮູບແບບເປັນບໍລິສັດຈຳກັດທົ່ວໄປ.ການຍຸບເລີກຂອງບໍລິສັດຈຳກັດ-ຜູ້ດຽວ ຈະພາໃຫ້ມີການຊຳລະສະສາງໄດ້ກໍຕໍ່ເມື່ອຫາກບໍ່ມີຜູ້ສືບທອດເທົ່ານັ້ນ.

ນອກຈາກລະບຽບຫລັກການທີ່ໄດ້ກຳນົດໄວ້ໃນມາດຕາ 57 ແລະ 58 ຂອງກົດຫມາຍສະບັບນີ້ແລ້ວ ການສ້າງຕັ້ງ ແລະການເຄື່ອນໄຫວຂອງບໍລິສັດຈຳກັດ-ຜູ້ດຽວ ແມ່ນໃຫ້ປະຕິບັດຕາມລະບຽບຫລັກການຂອງບໍລິສັດຈຳກັດທົ່ວໄປ.

## IV. ບໍລິສັດມະຫາຊົນ

**ມາດຕາ 60.** ບໍລິສັດມະຫາຊົນ ແມ່ນຮູບແບບບໍລິສັດຫນຶ່ງ ຊຶ່ງສ້າງຕັ້ງຂຶ້ນດ້ວຍຮູບການແບ່ງທຶນເປັນຮຸ້ນ ແຕ່ລະຮຸ້ນມີມູນຄ່າເທົ່າກັນ ແລະ ມີຜູ້ຖືຮຸ້ນລິເລີ່ມສ້າງຕັ້ງບໍລິສັດແຕ່ເຈັດຄົນຂຶ້ນໄປຊຶ່ງມີຄວາມຮັບຜິດຊອບຕໍ່ຫນີ້ສິນບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນຖອກເຕັມເທົ່ານັ້ນ.

ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງມີຖານະເປັນນັກທຸລະກິດ.

**ມາດຕາ 61.** ຮຸ້ນຂອງບໍລິສັດມະຫາຊົນອາດຈະປະກອບເປັນເງິນ ຫລືວັດຖຸກໍໄດ້.

ຮຸ້ນທີ່ເປັນເງິນຕ້ອງໄດ້ຖອກໃນມື້ສ້າງຕັ້ງບໍລິສັດຢ່າງຫນ້ອຍຊາວຫ້າສ່ວນຮ້ອຍຂອງມູນຄ່າຮຸ້ນທີ່ຕົນຕ້ອງປະກອບ, ສ່ວນທີ່ເຫລືອຕ້ອງຖອກພາຍໃນກໍານົດສາມປີ ນັບແຕ່ມື້ບໍລິສັດໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ຕາມການກໍານົດຂອງສະພາບໍລິຫານ.

ຮຸ້ນທີ່ມອບເປັນວັດຖຸຕ້ອງຕີມູນຄ່າເປັນເງິນ ໂດຍຄະນະກວດກາການປະກອບຮຸ້ນ ຫລື ກອງປະຊຸມສ້າງຕັ້ງບໍລິສັດ ແລະຕ້ອງໄດ້ມອບໃຫ້ບໍລິສັດໃນວັນຈອງຮຸ້ນ.

ມູນຄ່າຮຸ້ນຫນຶ່ງຂອງບໍລິສັດສູງສຸດບໍ່ໃຫ້ເກີນ 10.000 ກີບ.

**ມາດຕາ 62.** ໃບຮຸ້ນຂອງບໍລິສັດມະຫາຊົນຈະໂອນໃຫ້ຄົນພາຍໃນ ຫລືຄົນພາຍນອກບໍລິສັດກໍໄດ້. ສໍາລັບການໂອນຮຸ້ນໃຫ້ຄົນພາຍນອກບໍລິສັດນັ້ນ ຕ້ອງແຈ້ງໃຫ້ສະພາບໍລິຫານຊາບ ພາຍໃນກໍານົດເຈັດວັນ ນັບແຕ່ມື້ໂອນເປັນຕົ້ນໄປ.

ໃບຮຸ້ນຂອງບໍລິສັດມະຫາຊົນສາມາດປ່ຽນມືໄດ້.

**ມາດຕາ 63.** ຊື່ຂອງບໍລິສັດມະຫາຊົນອາດຈະໃສ່ຕາມຂະແຫນງທຸລະກິດ, ຕາມວັດຖຸປະສົງຂອງບໍລິສັດ ແລະອື່ນໆໂດຍມີຄໍາວ່າ " ບໍລິສັດມະຫາຊົນ " ຕິດພ້ອມ.

ທຶນຂອງບໍລິສັດມະຫາຊົນນອກຈາກໄດ້ມາຈາກການປະກອບທຶນ ແລະ ຜູ້ຖືຮຸ້ນແລ້ວຍັງສາມາດລະດົມທຶນຈາກພາຍນອກຢ່າງເປີດເຜີຍ ແລະ ຈາກການຈໍາຫນ່າຍໃບຮຸ້ນກູ້ໄດ້. ບໍລິສັດຈະນໍາໃຊ້ທຶນດັ່ງກ່າວນັ້ນໄດ້ກໍຕໍ່ເມື່ອໄດ້ຂຶ້ນທະບຽນວິສາຫະກິດແລ້ວເທົ່ານັ້ນ.

ທຶນຈົດທະບຽນ ຂອງບໍລິສັດມະຫາຊົນ ຢ່າງຫນ້ອຍບໍ່ໃຫ້ຕໍ່າກ່ວາ 50.000.000 ກີບ, ເວັ້ນເສັຽແຕ່ລັດຖະບານຫາກໄດ້ກໍານົດສູງກວ່ານີ້ສໍາລັບບາງທຸລະກິດ.

**ມາດຕາ 64.** ການຄຸ້ມຄອງບໍລິສັດມະຫາຊົນ ແມ່ນດໍາເນີນໂດຍສະພາບໍລິຫານ ຊຶ່ງປະກອບດ້ວຍສະມາຊິກແຕ່ຫ້າ ຫາ ສິບເອັດຄົນ ໃນນັ້ນຕ້ອງມີຜູ້ຕາງຫນ້າຄົນງານຫນຶ່ງ ຫລືສອງຄົນ.

ກໍາມະການສະພາບໍລິຫານມີອາຍຸການສາມປີ ຖືກແຕ່ງຕັ້ງ ແລະອາດຈະຖືກປົດຕໍາແຫນ່ງໂດຍກອງປະຊຸມໃຫຍ່ສະໄຫມສາມັນຂອງຜູ້ຖືຮຸ້ນ. ກໍາມະການສະພາບໍລິຫານສາມາດຖືກແຕ່ງຕັ້ງຄືນໃຫມ່ໄດ້.

**ມາດຕາ 65.** ກໍາມະການສະພາບໍລິຫານຕ້ອງເປັນຜູ້ຖືຮຸ້ນເວັ້ນເສັຽແຕ່ຜູ້ຕາງຫນ້າຄົນງານ.

ກໍາມະການສະພາບໍລິຫານເປັນຜູ້ຕາງຫນ້າບໍລິສັດ ແລະມີສິດເຄື່ອນໄຫວແຕ່ໃນນາມສະພາບໍລິຫານເທົ່ານັ້ນ. ໃນກໍລະນີທີ່ກໍາມະການສະພາບໍລິຫານຫາກເປັນທັງຄົນງານ ຜູ້ກ່ຽວຈະໄດ້ຮັບນະໂຍບາຍ ກ່ຽວກັບການປະກັນໄພ ແລະອື່ນໆ ເຊັ່ນດຽວກັນກັບຄົນງານຜູ້ອື່ນໆ.

ເບັ້ຍປະຊຸມຂອງກຳມະການປະຈຳສະພາບໍລິຫານແມ່ນກຳນົດໂດຍກົດລະບຽບ ຫລືໂດຍກອງປະຊຸມໃຫຍ່ຜູ້ຖືຮຸ້ນ.

**ມາດຕາ 66.** ສະພາບໍລິຫານມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້ :

- ຕົກລົງກ່ຽວກັບການເຄື່ອນໄຫວທົ່ວໄປຂອງບໍລິສັດ;
- ເລືອກຕັ້ງເອົາປະທານສະພາບໍລິຫານໜຶ່ງຄົນ;
- ເລືອກຕັ້ງເອົາຜູ້ອຳນວຍການ;
- ກຳນົດເບັ້ຍປະຊຸມຂອງປະທານ, ກຳມະການສະພາບໍລິຫານ ແລະເງິນເດືອນຂອງ ຜູ້ອຳນວຍການ;
- ສະຫລຸບບັນຊີປະຈຳປີຂອງບໍລິສັດ, ເຮັດບົດລາຍງານການຄຸ້ມຄອງບໍລິສັດ;
- ອະນຸມັດການຄ້ຳປະກັນ;
- ຈັດເອກະສານຕ່າງໆຂອງບໍລິສັດໃຫ້ຜູ້ຖືຮຸ້ນ;
- ໄຂກອງປະຊຸມໃຫຍ່ສະໄໝສາມັນ ແລະຮຽກໂຮມກອງປະຊຸມອື່ນໆຂອງບໍລິສັດ.

**ມາດຕາ 67.** ສະພາບໍລິຫານໄຂກອງປະຊຸມໄດ້ທຸກເວລາຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ. ກອງປະຊຸມສະພາບໍລິຫານຈະໄຂຂຶ້ນໄດ້ ກໍຕໍ່ເມື່ອຫາກມີກຳມະການເຂົ້າຮ່ວມຢ່າງໜ້ອຍເຄິ່ງໜຶ່ງ ຂອງສະມາຊິກສະພາບໍລິຫານທັງໝົດ.

ກອງປະຊຸມສະພາບໍລິຫານຖືກຮຽກໂຮມໂດຍ :

- ປະທານສະພາບໍລິຫານ;
- ກຳມະການສະພາບໍລິຫານຢ່າງໜ້ອຍໜຶ່ງສ່ວນສາມຂອງຈຳນວນກຳມະການສະພາບໍລິຫານ ໃນກໍລະນີທີ່ປະທານຫາກບໍ່ຮຽກໂຮມກອງປະຊຸມ.

ມະຕິຂອງກອງປະຊຸມສະພາບໍລິຫານຈະມີຜົນສັກສິດໄດ້ ກໍຕໍ່ເມື່ອໄດ້ຮັບສຽງສ່ວນຫລາຍຂອງບັນດາກຳມະການສະພາບໍລິຫານ ແລະຜູ້ຕາງໜ້າກຳມະການສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີທີ່ມີສຽງເທົ່າກັນນັ້ນ ສຽງຂອງປະທານເປັນອັນຕັດສິນຊີ້ຂາດ.

**ມາດຕາ 68.** ຄະນະກຳມະການສະພາບໍລິຫານຕ້ອງຮັບຜິດຊອບທາງແພ່ງຮ່ວມກັນຕໍ່ບໍລິສັດ ແລະຕໍ່ຄົນພາຍນອກ ໃນກໍລະນີທີ່ໄດ້ລະເມີດລະບຽບກົດໝາຍ, ກົດລະບຽບຂອງບໍລິສັດ ຫລືໄດ້ມີຄວາມຜິດພາດໃນການຄຸ້ມຄອງບໍລິສັດ ຊຶ່ງພາໃຫ້ເກີດຄວາມເສັຽຫາຍ. ຖ້າຄວາມເສັຽຫາຍດັ່ງກ່າວຫາກເກີດຂຶ້ນຍ້ອນຄວາມຜິດພາດຂອງກຳມະການ ສະພາບໍລິຫານຜູ້ໃດຜູ້ໜຶ່ງແລ້ວຜູ້ນັ້ນກໍຈະເປັນຜູ້ຮັບຜິດຊອບ ຕໍ່ຄວາມເສັຽຫາຍແຕ່ຜູ້ດຽວ. ນອກຈາກນັ້ນ ກຳມະການສະພາບໍລິຫານອາດຈະໄດ້ຮັບຜິດຊອບທາງອາຍາໃນກໍລະນີທີ່ໄດ້ກະທຳຜິດທາງອາຍາ.

**ມາດຕາ 69.** ສະພາບໍລິຫານເລືອກຕັ້ງເອົາປະທານໜຶ່ງຄົນ ໃນບັນດາສະມາຊິກຂອງຕົນ ເອີ້ນວ່າ ປະທານສະພາບໍລິຫານ. ນິຕິບຸກຄົນຈະເປັນປະທານສະພາບໍລິຫານບໍ່ໄດ້. ປະທານມີອາຍຸການເທົ່າກັບກຳມະການສະພາບໍລິຫານ ແລະສາມາດສະໜັກຮັບເລືອກຕັ້ງໄດ້ໃໝ່ ເວັ້ນເສັຽແຕ່ກົດລະບຽບຂອງບໍລິສັດຫາກບົ່ງໄວ້ຢ່າງອື່ນ.

ປະທານສະພາບໍລິຫານອາດຈະຖືກປົດຕຳແໜ່ງໂດຍສະພາບໍລິຫານ.

ໃນກໍລະນີທີ່ປະທານຫາກຕິດຂັດ ແມ່ນກຳມະການສະພາບໍລິຫານຜູ້ໃດຜູ້ໜຶ່ງເປັນຜູ້ດຳເນີນງານແທນຕາມການຕົກລົງຂອງສະພາບໍລິຫານ.

**ມາດຕາ 70.** ປະທານສະພາບໍລິຫານເປັນຜູ້ຮຽກໂຮມ ແລະນຳພາກອງປະຊຸມ.

ນອກຈາກນີ້ແລ້ວ ສິດ ແລະ ໜ້າທີ່ລະອຽດຂອງປະທານສະພາບໍລິຫານ ແມ່ນກຳນົດໄວ້ໃນກົດລະບຽບຂອງບໍລິສັດ.

ທຸກການເຄື່ອນໄຫວຂອງປະທານໃນການພົວພັນກັບຄົນພາຍນອກ ແມ່ນຕົກເປັນຄວາມຮັບຜິດຊອບຂອງບໍລິສັດທັງໝົດ ເວັ້ນເສັຽແຕ່ທາງບໍລິສັດຫາກມີຫລັກຖານວ່າຄົນພາຍນອກນັ້ນ ຮູ້ວ່າການກະທຳຂອງປະທານ ແມ່ນຢູ່ນອກຂອບເຂດວັດຖຸປະສົງຂອງບໍລິສັດ.

ປະທານຈະອະນຸມັດການຄ້ຳປະກັນໃນນາມບໍລິສັດໄດ້ກໍຕໍ່ເມື່ອຫາກໄດ້ຮັບສິດສະເພາະຈາກສະພາບໍລິຫານເທົ່ານັ້ນ.

ປະທານໃນຖານະເປັນກຳມະການສະພາບໍລິຫານ ມີຄວາມຮັບຜິດຊອບເຊັ່ນດຽວກັນກັບກຳມະການສະພາບໍລິຫານຜູ້ອື່ນໆ ດັ່ງທີ່ໄດ້ບົ່ງໄວ້ໃນມາດຕາ 68 ຂອງກົດໝາຍສະບັບນີ້. ນອກຈາກນີ້ ປະທານຍັງ ຕ້ອງໄດ້ຮັບຜິດຊອບ ຕໍ່ຄວາມຜິດສ່ວນຕົວອີກ ໃນການດຳເນີນວຽກງານຂອງບໍລິສັດ.

**ມາດຕາ 71.** ສະພາບໍລິຫານອາດຈະເລືອກຕັ້ງເອົາບຸກຄົນຜູ້ໃດຜູ້ໜຶ່ງມາເປັນຜູ້ອຳນວຍການຕາມຄຳສະເໜີຂອງປະທານ.

ຜູ້ອຳນວຍການອາດຈະຄັດເລືອກເອົາໃນບັນດາກຳມະການສະພາບໍລິຫານ ຫລື ຄົນພາຍນອກກໍໄດ້ປະທານສະພາບໍລິຫານອາດຈະຮັບຜິດຊອບເປັນຜູ້ອຳນວຍການ ຕາມຄວາມ ເຫັນດີຂອງສະພາບໍລິຫານກໍໄດ້ ຊຶ່ງເອີ້ນວ່າ : “ປະທານອຳນວຍການ “.

ຜູ້ອຳນວຍການອາດຈະຖືກປົດຕຳແໜ່ງໂດຍສະພາບໍລິຫານ. ເງິນເດືອນຂອງຜູ້ອຳນວຍການແມ່ນສະພາບໍລິຫານເປັນຜູ້ກຳນົດ. ອາຍຸການ ແລະໜ້າທີ່ຂອງຜູ້ອຳນວຍການ ທີ່ບໍ່ແມ່ນກຳມະການຂອງສະພາບໍລິຫານ ແມ່ນສະພາບໍລິຫານເປັນຜູ້ກຳນົດ. ສຳລັບຜູ້ອຳນວຍການທີ່ເປັນກຳມະການສະພາບໍລິຫານນັ້ນມີອາຍຸການສາມປີ ແລະສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ຜູ້ອຳນວຍການ ມີຄວາມຮັບຜິດຊອບນຳພາວຽກງານລວມຂອງບໍລິສັດ. ດຳເນີນທຸກກິດຈະການໃນນາມບໍລິສັດທີ່ຢູ່ໃນຂອບເຂດວັດຖຸປະສົງຂອງບໍລິສັດ.

**ມາດຕາ 72.** ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດມະຫາຊົນ.

ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ມີສອງປະເພດຄື :

- ກອງປະຊຸມໃຫຍ່ສະໄຫມສາມັນ;
- ກອງປະຊຸມໃຫຍ່ສະໄຫມວິສາມັນ.

**ມາດຕາ 73.** ກອງປະຊຸມໃຫຍ່ສະໄຫມສາມັນ ແມ່ນກອງປະຊຸມບັນດາຜູ້ຖືຮຸ້ນຊຶ່ງໄຂຂຶ້ນຢ່າງຫນ້ອຍປີລະຄັ້ງ ເພື່ອພິຈາລະນາບັນຫາ ກ່ຽວກັບການເຄື່ອນໄຫວຂອງບໍລິສັດ.

ກອງປະຊຸມໃຫຍ່ສະໄຫມສາມັນອາດຖືກຮຽກໂຮມໂດຍ :

- ສະພາບໍລິຫານ;
- ຜູ້ອຳນວຍການ;
- ເຈົ້າຫນ້າທີ່ກວດສອບບັນຊີ;
- ຜູ້ຊຳລະສະສາງ;
- ຜູ້ຖືຮຸ້ນທີ່ຕາງຫນ້າຢ່າງຫນ້ອຍໃຫ້ຫນຶ່ງສ່ວນສາມຂອງຈຳນວນຮຸ້ນທັງຫມົດ;
- ຜູ້ຖືກແຕ່ງຕັ້ງຈາກສານຕາມຄຳຮ້ອງຂໍຂອງຜູ້ຖືຮຸ້ນ;

ຫມາຍຮຽກໂຮມ ພ້ອມດ້ວຍລາຍການກອງປະຊຸມ ຕ້ອງສົ່ງໄປເຖິງຜູ້ຖືຮຸ້ນ ຢ່າງຊ້າ ສິບຫ້າວັນກ່ອນວັນໄຂກອງປະຊຸມ.

ກອງປະຊຸມໃຫຍ່ສະໄຫມສາມັນຈະໄຂຂຶ້ນໄດ້ກໍຕໍ່ເມື່ອຫາກມີຜູ້ຖືຮຸ້ນ ແລະ ຜູ້ຕາງຫນ້າຜູ້ຖືຮຸ້ນເຂົ້າຮ່ວມທີ່ມີຈຳນວນຮຸ້ນຢ່າງຫນ້ອຍເຄິ່ງຫນຶ່ງຂອງຮຸ້ນທັງຫມົດ. ໃນກໍລະນີທີ່ບໍ່ສາມາດໄຂຂຶ້ນໄດ້ການຮຽກໂຮມຄັ້ງທີ່ສອງນັ້ນ ກອງປະຊຸມສາມາດໄຂຂຶ້ນໄດ້ ໂດຍບໍ່ອີງໃສ່ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມໃຫຍ່ສະໄຫມສາມັນຈະມີຜົນສັກສິດໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫລາຍຂອງຈຳນວນຮຸ້ນທັງຫມົດ ຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງແມ່ນຖືເອົາຫນຶ່ງຮຸ້ນຕໍ່ຫນຶ່ງຄະແນນ.

**ມາດຕາ 74.** ກອງປະຊຸມໃຫຍ່ສະໄຫມສາມັນມີສິດ ແລະຫນ້າທີ່ດັ່ງນີ້ :

- ຮັບຟັງບົດລາຍງານຂອງສະພາບໍລິຫານ ກ່ຽວກັບການດຳເນີນງານຂອງບໍລິສັດ, ຮັບຟັງການແຈ້ງຜົນກຳໄລ ແລະຂໍ້ສະເຫນີກ່ຽວກັບການແບ່ງປັນຜົນກຳໄລ;
- ຮັບຟັງບົດລາຍງານຂອງເຈົ້າຫນ້າທີ່ກວດສອບບັນຊີ;
- ລົງມະຕິກ່ຽວກັບການດຳເນີນງານຜ່ານມາຂອງບໍລິສັດ ແລະແຜນການໃນປີຕໍ່ໄປ;
- ຮັບຮອງເອົາບັນຊີປະຈຳປີ;
- ຮັບຮອງເອົາການແບ່ງປັນຜົນກຳໄລ;
- ເລືອກຕັ້ງ ຫລືປົດຕຳແຫນ່ງກຳມະການສະພາບໍລິຫານ;
- ແຕ່ງຕັ້ງເຈົ້າຫນ້າທີ່ກວດສອບບັນຊີ ພ້ອມທັງກຳນົດຄ່າກວດສອບຂອງເຈົ້າຫນ້າທີ່ກວດ ສອບບັນຊີ;

- ອະນຸຍາດໃຫ້ສະພາບໍລິຫານ ດຳເນີນວຽກງານສະເພາະໃດໜຶ່ງ ຕາງກອງປະຊຸມໃຫຍ່ສະໄຫມສາມັນ.

**ມາດຕາ 75.** ກອງປະຊຸມໃຫຍ່ສະໄຫມວິສາມັນຈະໄຂຂຶ້ນເວລາໃດກໍໄດ້ ເພື່ອພິຈາລະນາການປ່ຽນແປງກົດລະບຽບຂອງບໍລິສັດ ເຊັ່ນ: ການຕໍ່ອາຍຸການ, ການເພີ່ມທຶນຂຶ້ນ, ການຫລຸດທຶນລົງຂອງບໍລິສັດ.

ລະບຽບການຮຽກໂຮມກອງປະຊຸມໃຫຍ່ສະໄຫມວິສາມັນ ແມ່ນຄືກັນກັບລະບຽບການຮຽກໂຮມກອງປະຊຸມໃຫຍ່ສະໄຫມສາມັນ.

ກອງປະຊຸມໃຫຍ່ສະໄຫມວິສາມັນຈະໄຂຂຶ້ນໄດ້ກໍຕໍ່ເມື່ອຫາກມີຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນເຂົ້າຮ່ວມປະຊຸມ ຈຳນວນຢ່າງໜ້ອຍສອງສ່ວນສາມຂອງຮຸ້ນທັງໝົດ ສຳລັບການຮຽກໂຮມຄັ້ງທີ່ໜຶ່ງ ແລະຢ່າງໜ້ອຍເຄິ່ງໜຶ່ງຂອງຜູ້ຖືຮຸ້ນທັງໝົດສຳລັບການຮຽກໂຮມຄັ້ງທີ່ສອງ. ໃນກໍລະນີທີ່ຜູ້ຖືຮຸ້ນຫາກບໍ່ມາປະຊຸມຄົບຕາມຈຳນວນດັ່ງກ່າວກໍໃຫ້ເລື່ອນການປະຊຸມໄປ ແຕ່ໃຫ້ໄຂຂຶ້ນພາຍໃນກຳນົດສອງເດືອນຢ່າງຊ້າ ແລະ ໃນການຮຽກໂຮມຄັ້ງນີ້ກອງປະຊຸມຈະໄຂຂຶ້ນ ເຖິງວ່າຈະມີຜູ້ເຂົ້າຮ່ວມກອງປະຊຸມຈຳນວນເທົ່າໃດກໍຕາມ.

ມະຕິຂອງກອງປະຊຸມໃຫຍ່ສະໄຫມວິສາມັນຈະມີຜົນສັກສິດໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງສອງສ່ວນສາມຂອງຈຳນວນຮຸ້ນທັງໝົດຂອງຜູ້ຖືຮຸ້ນ ແລະຜູ້ຕາງໜ້າຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 76.** ຜູ້ຖືຮຸ້ນບໍລິສັດມະຫາຊົນມີສິດ ແລະໜ້າທີ່ຄືກັນກັບສິດ ແລະໜ້າທີ່ຜູ້ຖືຮຸ້ນຂອງບໍລິສັດຈຳກັດ.

## ໝວດທີ 4
## ວິສາຫະກິດຂອງລັດ

**ມາດຕາ 77.** ວິສາຫະກິດຂອງລັດ ແມ່ນຫົວໜ່ວຍທຸລະກິດທີ່ລັດເປັນຜູ້ສ້າງຕັ້ງ ແລະລົງທຶນແຕ່ຜູ້ດຽວ ຫລືຮ່ວມທຶນກັບພາກສ່ວນວິສາຫະກິດອື່ນ ຊຶ່ງແມ່ນທຶນລັດແຕ່ ຫ້າສິບເອັດສ່ວນຮ້ອຍຂຶ້ນໄປ.

ວິສາຫະກິດຂອງລັດ ຫລື ລັດ ສາມາດເປັນຜູ້ປະກອບຮຸ້ນໄດ້ໃນສອງຮູບແບບບໍລິສັດຄື : ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນເທົ່ານັ້ນ.

**ມາດຕາ 78.** ລັດອາດຈະປະກອບທຶນດັ່ງຕໍ່ໄປນີ້ :

- ວິສາຫະກິດ ທີ່ລັດລົງທຶນຮ້ອຍສ່ວນຮ້ອຍແມ່ນລັດວິສາຫະກິດ.

- ວິສາຫະກິດທີ່ລັດລົງທຶນຮ່ວມກັບປະເພດວິສາຫະກິດອື່ນ ແຕ່ຫ້າສິບເອັດສ່ວນຮ້ອຍຂຶ້ນໄປແຕ່ບໍ່ເຖິງຮ້ອຍສ່ວນຮ້ອຍ ແມ່ນລັດວິສາຫະກິດປະສົມ.

- ລັດຮຸ້ນສ່ວນກັບພາກສ່ວນອື່ນ ແມ່ນລັດຮ່ວມທຶນກັບປະເພດວິສາຫະກິດອື່ນຕ່ຳກວ່າຫ້າສິບສ່ວນຮ້ອຍ.

**I. ລັດວິສາຫະກິດ.**

**ມາດຕາ 79.** ລັດວິສາຫະກິດມີຄວາມຮັບຜິດຊອບຢ່າງເຕັມສ່ວນຕໍ່ຫນີ້ສິນຂອງຕົນ. ນອກຈາກທຶນທີ່ລັດປະກອບໃຫ້ແລ້ວ ລັດວິສາຫະກິດສາມາດເພີ່ມທຶນຂອງຕົນດ້ວຍ :

- ການກູ້ຢືມເງິນນຳທະນາຄານ ແລະສະຖາບັນການເງິນຕ່າງໆ ທັງພາຍໃນ ແລະຕ່າງປະເທດບົນພື້ນຖານລະບຽບກົດຫມາຍ;

- ລະດົມທຶນຈາກພາຍນອກຢ່າງເປີດເຜີຍ ເຊັ່ນ ຂາຍໃບຮຸ້ນກູ້ບົນພື້ນຖານການຕົກລົງຂອງລັດຖະບານ.

**ມາດຕາ 80.** ລັດຖະມົນຕີວ່າການກະຊວງການເງິນ ຕາງຫນ້າລັດຖະບານ ໃນຖານະເປັນເຈົ້າທຶນຂອງລັດວິສາຫະກິດເປັນຜູ້ :

- ສະເຫນີສ້າງຕັ້ງ ຫລືຍຸບເລີກ ລັດວິສາຫະກິດ;
- ກຳນົດເປົ້າຫມາຍ, ວັດຖຸປະສົງຂອງລັດວິສາຫະກິດ;

- ແຕ່ງຕັ້ງ ຫລືປົດຕຳແຫນ່ງປະທານ, ຮອງປະທານ, ສະມາຊິກສະພາບໍລິຫານ ແລະຜູ້ອຳນວຍການ;
- ກຳນົດເງິນບຳເນັດ ແລະ ເງິນນະໂຍບາຍໃຫ້ປະທານ, ສະມາຊິກສະພາບໍລິຫານ ແລະຜູ້ຖືກເຊີນໃນເວລາເຂົ້າຮ່ວມກອງປະຊຸມ;
- ສະເຫນີໂອນທຸລະກິດ ຫລືຂາຍຊັບສົມບັດຂອງລັດວິສາຫະກິດ.

**ມາດຕາ 81.** ກະຊວງການເງິນເປັນຜູ້ປະສານສົມທົບກັບຂະແຫນງການທີ່ກ່ຽວຂ້ອງເພື່ອອະນຸຍາດສ້າງຕັ້ງໂດຍຜ່ານຄວາມເຫັນດີຂອງນາຍົກລັດຖະມົນຕີ, ຫລັງຈາກນັ້ນຈຶ່ງຂຶ້ນທະບຽນຢູ່ກະຊວງການຄ້າແລ້ວຈົດທະບຽນອາກອນນຳກະຊວງການເງິນ.

ລັດວິສາຫະກິດຕ້ອງສ້າງຕັ້ງຂຶ້ນບົນພື້ນຖານເງື່ອນໄຂ, ມາດຕະຖານທາງດ້ານທຶນ ແລະອື່ນໆທີ່ບົ່ງໄວ້ໃນກົດຫມາຍສະບັບນີ້ ແລະລະບຽບການທີ່ຂະແຫນງການກ່ຽວຂ້ອງວາງອອກ.

**ມາດຕາ 82.** ລັດວິສາຫະກິດຄຸ້ມຄອງໂດຍສະພາບໍລິຫານ ຊຶ່ງປະກອບດ້ວຍສະມາຊິກແຕ່ສາມ ຫາ ສິບເອັດຄົນໃນນັ້ນມີ :

- ປະທານຫນຶ່ງຄົນຖືກແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງການເງິນ ໂດຍຄວາມເຫັນດີຂອງກະຊວງກ່ຽວຂ້ອງ;

- ຮອງປະທານຖືກແຕ່ງຕັ້ງໂດຍ ລັດຖະມົນຕີວ່າການກະຊວງການ ເງິນ ຕາມການສະເຫນີຂອງລັດຖະມົນຕີຂະແຫນງການກ່ຽວຂ້ອງ;

- ກຳມະການຈຳນວນຫນຶ່ງຊຶ່ງປະກອບດ້ວຍຜູ້ຕາງຫນ້າພະນັກງານ-ກຳມະກອນຂອງບໍລິສັດຫນຶ່ງຄົນ, ເຫລືອນັ້ນແມ່ນຜູ້ຊົງຄຸນວຸດທິ ທີ່ມີປະສົບການທາງດ້ານທຸລະກິດ ຊຶ່ງແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງການເງິນ.

ສະພາບໍລິຫານແລະກຳມະການສະພາບໍລິຫານມີອາຍຸການ ສາມປີ, ກຳມະການສະພາບໍລິຫານສາມາດຖືກແຕ່ງຕັ້ງຄືນໃຫມ່ໄດ້.

**ມາດຕາ 83.** ສະພາບໍລິຫານມີສິດ ແລະຫນ້າທີ່ດັ່ງນີ້ :

- ຮັບຮອງເອົາຍຸດທະສາດ ໃນການດຳເນີນທຸລະກິດ;
- ຕີລາຄາຜົນຂອງການດຳເນີນທຸລະກິດ ຂອງວິສາຫະກິດ;
- ສະເຫນີແຕ່ງຕັ້ງ ຫລື ປົດຕຳແຫນ່ງຜູ້ອຳນວຍການ;
- ກຳນົດເງິນເດືອນ ແລະເງິນບຳເນັດຂອງຜູ້ອຳນວຍການ ແລະຜູ້ຮອງອຳນວຍການບົນພື້ນຖານລະບຽບການທີ່ກະຊວງການເງິນວາງອອກ;
- ກຳນົດໂຄງປະກອບຂອງທຶນ;
- ກຳນົດອັດຕາສ່ວນພົວພັນລະຫວ່າງເງິນກູ້ຢືມ ແລະທຶນ;
- ກຳນົດສະມັດຖະພາບທີ່ວິສາຫະກິດ ຈະຕ້ອງສູ້ຊົນປະຕິບັດໃຫ້ໄດ້;
- ຂາຍໃບຮຸ້ນກູ້ ໃຫ້ພະນັກງານ, ກຳມະກອນ ໃນວິສາຫະກິດຂອງຕົນ ຫລືຂາຍທົ່ວໄປ;
- ຮັບຮອງເອົາການແຕ່ງຕັ້ງ ຫົວຫນ້າການບັນຊີ ບົນພື້ນຖານການສະເຫນີຂອງຜູ້ອຳນວຍການວິສາຫະກິດ;
- ສະເຫນີເອົາເຈົ້າຫນ້າທີ່ ກວດສອບບັນຊີ;
- ສະເຫນີກ່ຽວກັບການປ່ຽນແປງທຶນ ແລະ ກົດລະບຽບຂອງລັດວິສາຫະກິດ.

**ມາດຕາ 84.** ສະພາບໍລິຫານໄຂກອງປະຊຸມສະໄຫມສາມັນ 3 ເດືອນໃດເທື່ອຫນຶ່ງ, ສ່ວນກອງປະຊຸມສະໄຫມວິສາມັນນັ້ນ ສາມາດໄຂ ຂຶ້ນໄດ້ທຸກເວລາ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ໂດຍແມ່ນປະທານສະພາບໍລິຫານ ເປັນຜູ້ຮຽກໂຮມໂດຍກົງ ຫລືຕາມການສະເຫນີຂອງກຳມະການສະພາບໍລິຫານ ຫລາຍກວ່າເຄິ່ງຫນຶ່ງຂອງຈຳນວນທັງຫມົດ.

ສະພາບໍລິຫານເປັນຜູ້ອຳນວຍຄວບຄຸມ ແຕ່ບໍ່ເຂົ້າຮ່ວມໂດຍກົງໃນການຄຸ້ມຄອງວຽກງານປະຈຳວັນຂອງຜູ້ອຳນວຍການ ເວັ້ນເສັຽແຕ່ກຳມະການຂອງສະພາບໍລິຫານຜູ້ໃດຜູ້ຫນຶ່ງຫາກຖືກແຕ່ງຕັ້ງເປັນທັງຜູ້ອຳນວຍການ.

**ມາດຕາ 85.** ຜູ້ອຳນວຍການລັດວິສາຫະກິດ ແມ່ນລັດຖະມົນຕີວ່າການກະຊວງການເງິນເປັນຜູ້ແຕ່ງຕັ້ງ ຫລືປົດຕຳແຫນ່ງ ຕາມການສະເຫນີຂອງສະພາບໍລິຫານ.

ຮອງຜູ້ອຳນວຍການ ແມ່ນສະພາບໍລິຫານຂອງລັດວິສາຫະກິດ ເປັນຜູ້ແຕ່ງຕັ້ງ ຫລືປົດຕຳແຫນ່ງຕາມການສະເຫນີຂອງຜູ້ອຳນວຍການ.

**ມາດຕາ 86.** ຜູ້ອຳນວຍການມີສິດ ແລະຫນ້າທີ່ດັ່ງນີ້ :

- ຮັບຜິດຊອບຕໍ່ສະພາບໍລິຫານກ່ຽວກັບການບໍລິຫານ ແລະການຄຸ້ມຄອງວິສາຫະກິດໄປຕາມເປົ້າຫມາຍຍຸດທະສາດ ແລະແຜນການທີ່ຖືກຮັບຮອງເອົາໂດຍສະພາບໍລິຫານ;
- ມີສິດຕັດສິນທຸກບັນຫາຂອງລັດວິສາຫະກິດໃນຂອບເຂດ ທີ່ສະພາບໍລິຫານ ໄດ້ກຳນົດໄວ້;
- ສະເຫນີຜ່ານເປັນແຕ່ລະໄລຍະ ກ່ຽວກັບແຜນການ, ບົດສະຫລຸບຊັບສິນບັດ, ບົດສະຫລຸບການເຄື່ອນໄຫວ ແລະບົດລາຍງານສະເພາະອື່ນໆ ທີ່ສະພາບໍລິຫານຮຽກຮ້ອງ ກ່ອນກອງປະຊຸມ.

**ມາດຕາ 87.** ທຶນ ແລະຄັງສະສົມທັງຫມົດ ພ້ອມທັງຜົນກຳໄລຂອງລັດວິສາຫະກິດ ນັບແຕ່ມື້ສ້າງຕັ້ງເປັນຕົ້ນມາທີ່ສະແດງອອກໃນໃບສະຫລຸບຊັບສິນບັດ ແມ່ນເປັນທຶນຂອງລັດທີ່ໄດ້ປະກອບໃຫ້ລັດວິສາຫະກິດ.

ການນຳໃຊ້ທຶນຂອງລັດວິສາຫະກິດແມ່ນສະພາບໍລິຫານເປັນຜູ້ຕົກລົງບົນພື້ນຖານລະບຽບຫລັກການ ທີ່ໄດ້ກຳນົດໄວ້ ສ່ວນເຫລືອຈາກການນຳໃຊ້ນັ້ນ ແມ່ນລັດເປັນເຈົ້າກຳມະສິດແຕ່ຜູ້ດຽວ.

ກຳໄລໃນແຕ່ລະປີຂອງລັດວິສາຫະກິດ ພາຍຫລັງທີ່ໄດ້ເສຍອາກອນຕ່າງໆ ຕາມລະບຽບການແລ້ວ ແມ່ນໃຫ້ແບ່ງປັນ ຕາມເປົ້າຫມາຍບູລິມະສິດ ດັ່ງນີ້ :

- ໃຫ້ຄັງສະສົມຕາມລະບຽບການ;
- ໃຫ້ການຊຳລະຕົ້ນທຶນເງິນກູ້ ພາຍໃນ ແລະຕ່າງປະເທດ;
- ໃຫ້ຄັງຂະຫຍາຍການຜະລິດ;
- ໃຫ້ຄັງສະສົມອື່ນໆ ຍົກເວັ້ນຄັງສະຫວັດດີການສັງຄົມ ແລະຄັງບຳເນັດ;
- ໃຫ້ລັດ.

## II. ລັດວິສາຫະກິດປະສົມ

**ມາດຕາ 88.** ລັດວິສາຫະກິດປະສົມ ແມ່ນຫົວຫນ່ວຍທຸລະກິດທີ່ສ້າງຕັ້ງຂຶ້ນບົນພື້ນຖານການເຂົ້າຮ່ວມຂອງປະເພດວິສາຫະກິດອື່ນ ກັບລັດ ຊຶ່ງໃນນີ້ ລັດມີທຶນແຕ່ຫ້າສິບເອັດສ່ວນຮ້ອຍຂຶ້ນໄປຂອງທຶນທັງຫມົດ ແຕ່ບໍ່ເຖິງຮ້ອຍສ່ວນຮ້ອຍ.

ຜູ້ຖືຮຸ້ນຂອງລັດວິສາຫະກິດປະສົມຮັບຜິດຊອບຕໍ່ຫນີ້ສິນຂອງບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນຖອກເຕັມເທົ່ານັ້ນ.

ຮຸ້ນຂອງລັດວິສາຫະກິດປະສົມອາດປະກອບເປັນເງິນ ຫລື ເປັນວັດຖຸຕາມລະບຽບການຂອງບໍລິສັດມະຫາຊົນ.

**ມາດຕາ 89.** ລັດວິສາຫະກິດປະສົມ ຄຸ້ມຄອງ ແລະເຄື່ອນໄຫວຕາມລະບຽບການ ຂອງບໍລິສັດມະຫາຊົນ ຍົກເວັ້ນບາງກໍລະນີດັ່ງນີ້:

- ການໂອນຮຸ້ນຂອງລັດ ແມ່ນລັດຖະບານເປັນຜູ້ຕົກລົງ ສ່ວນຮຸ້ນຂອງເອກະຊົນນັ້ນແມ່ນໃຫ້ປະຕິບັດຕາມລະບຽບການຂອງບໍລິສັດມະຫາຊົນ;

- ໃບຮຸ້ນຂອງລັດວິສາຫະກິດປະສົມ ສາມາດປ່ຽນມືໄດ້;

- ສະພາບໍລິຫານຂອງລັດວິສາຫະກິດປະສົມ ປະກອບດ້ວຍສະມາຊິກໃນຈຳນວນທີ່ສົມສ່ວນກັບທຶນ ຂອງວິສາຫະກິດ ໃນນັ້ນ ມີປະທານໜຶ່ງຄົນທີ່ຖືກແຕ່ງຕັ້ງຈາກລັດຖະມົນຕີວ່າການກະຊວງການເງິນ ຊຶ່ງໄດ້ຮັບຄຳເຫັນດີຈາກກະຊວງກ່ຽວຂ້ອງ; ຮອງປະທານໜຶ່ງຄົນ ຊຶ່ງຕາງໜ້າໃຫ້ພາກສ່ວນເອກະຊົນ ທີ່ຖືກຮັບຮອງ ເອົາໂດຍລັດຖະມົນຕີວ່າການກະຊວງການເງິນ ຕາມການສະເໜີຂອງພາກສ່ວນເອກະຊົນທີ່ກ່ຽວຂ້ອງ; ຜູ້ຕາງໜ້າຂອງພະນັກງານ-ກຳມະກອນຊຶ່ງໄດ້ຮັບການແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງການເງິນ;

- ມະຕິກອງປະຊຸມສະພາບໍລິຫານຈະມີຜົນສັກສິດກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫລາຍຂອງກຳມະການທີ່ເຂົ້າຮ່ວມກອງປະຊຸມ, ໃນກໍລະນີທີ່ມີສຽງເທົ່າກັນ ແມ່ນສຽງຂອງປະທານເປັນອັນຕັດສິນຊີ້ຂາດ;

- ຜູ້ອຳນວຍການແມ່ນສະພາບໍລິຫານເປັນຜູ້ແຕ່ງຕັ້ງ ຫລືປົດຕຳແໜ່ງຕາມການສະເໜີຂອງກອງປະຊຸມໃຫຍ່ຜູ້ຖືຮຸ້ນ;

- ຮອງຜູ້ອຳນວຍການ ແມ່ນກອງປະຊຸມໃຫຍ່ຜູ້ຖືຮຸ້ນ ເປັນຜູ້ແຕ່ງຕັ້ງ ຫລືປົດຕຳແໜ່ງຕາມການສະເໜີຂອງຜູ້ອຳນວຍການ.

**ມາດຕາ 90.** ລັດຮຸ້ນສ່ວນກັບປະເພດວິສາຫະກິດອື່ນ ແມ່ນລັດມີທຶນຫລຸດຫ້າສິບສ່ວນຮ້ອຍລົງມາ. ລັດຈະເຂົ້າຮ່ວມທຶນນຳແຕ່ບໍລິສັດຈຳກັດ ແລະບໍລິສັດມະຫາຊົນເທົ່ານັ້ນ. ສຳລັບການຈັດຕັ້ງ, ການຄຸ້ມຄອງ ແລະການເຄື່ອນໄຫວໃຫ້ປະຕິບັດຕາມລະບຽບການຂອງບໍລິສັດຈຳກັດ ຫລືບໍລິສັດມະຫາຊົນ ຊຶ່ງລັດເຂົ້າຮ່ວມທຶນນຳນັ້ນ.

## ໝວດທີ 5
## ວິສາຫະກິດລວມໝູ່

**ມາດຕາ 91.** ວິສາຫະກິດລວມໝູ່ ແມ່ນຫົວໜ່ວຍທຸລະກິດ ຊຶ່ງການຈັດຕັ້ງລວມໝູ່ແຕ່ສອງຄອບຄົວຂຶ້ນໄປເປັນຜູ້ສ້າງຕັ້ງຂຶ້ນ ເພື່ອເຄື່ອນໄຫວແນໃສ່ຫາຜົນກຳໄລ. ວິສາຫະກິດລວມໝູ່ດຳເນີນທຸລະກິດ ຕາມຮູບການ ຂອງສະຫະກອນຮ່ວມທຸລະກິດ.

**ມາດຕາ 92.** ສະຫະກອນຮ່ວມທຸລະກິດ ແມ່ນການຈັດຕັ້ງລວມໝູ່ທີ່ສ້າງຕັ້ງຂຶ້ນບົນພື້ນຖານຄວາມສະໝັກໃຈຂອງຊາວກະສິກອນ, ຊາວຊ່າງຫັດຖະກຳ ແລະຊາວຄ້າຂາຍນ້ອຍ ປະກອບທຶນ

ແລະແຮງງານເຂົ້າໃນການເຄື່ອນໄຫວທຸລະກິດຜະລິດ, ຄ້າຂາຍ ແລະບໍລິການ ແນໃສ່ເພື່ອຫາຜົນກໍາໄລ.

**ມາດຕາ 93.** ທຶນຂອງສະຫະກອນຮ່ວມທຸລະກິດບໍ່ໄດ້ກໍານົດມູນຄ່າໄວ້ ແລະສາມາດປ່ຽນແປງໄດ້ທຸກເວລາ. ໃນກໍລະນີທີ່ສະຫະກອນຮ່ວມທຸລະກິດຫາກມີສະມາຊິກຈໍານວນແຕ່ຊາວຄອບຄົວລົງມາ ການຄຸ້ມຄອງບໍລິຫານ, ການລົງມະຕິຕ້ອງປະຕິບັດຕາມລະບຽບການຂອງບໍລິສັດຈໍາກັດ. ແຕ່ຖ້າວ່າສະມາຊິກຫາກມີຫລາຍກວ່າຊາວຄອບຄົວແລ້ວ ການຄຸ້ມຄອງບໍລິຫານ, ການລົງມະຕິຕ້ອງປະຕິບັດຕາມລະບຽບການຂອງບໍລິສັດມະຫາຊົນ.

## ໝວດທີ 6
## ວິສາຫະກິດປະສົມ

**ມາດຕາ 94.** ວິສາຫະກິດປະສົມ ແມ່ນການຮ່ວມທຸລະກິດລະຫວ່າງວິສາຫະກິດຂອງລັດກັບວິສາຫະກິດຂອງພາຍໃນ ຫລືຕ່າງປະເທດ. ສໍາລັບການຈັດຕັ້ງ, ການບໍລິຫານ ແລະ ການຄຸ້ມຄອງຂອງວິສາຫະກິດປະສົມນັ້ນໃຫ້ປະຕິບັດຕາມມາດຕາ 88, 89 ແລະ 90 ຂອງກົດໝາຍສະບັບນີ້.ງ

# ພາກທີ IV
# ບົດບັນຍັດສຸດທ້າຍ

**ມາດຕາ 95.** ເນື້ອໃນຂອງກົດໝາຍ, ດໍາລັດ, ຄໍາຕົກລົງ ແລະຄໍາສັ່ງຊຶ່ງປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ມາດຕາ 96.** ລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຜູ້ອອກຂໍ້ກໍານົດ ເພື່ອຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 97.** ກົດໝາຍສະບັບນີ້ມີຜົນສັກສິດ ພາຍຫລັງ 30 ວັນ ນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ອອກລັດຖະດໍາລັດປະກາດໃຊ້ເປັນຕົ້ນໄປ.

ວຽງຈັນ, ວັນທີ 18 ກໍລະກົດ 1994
ປະທານສະພາແຫ່ງຊາດ
ເຊັນ ແລະ ປະທັບຕາ
ສະໝານ ວິຍະເກດ